# ທ່ານຫວ່າງງານຢູ່ແມ່ນບໍ?

ຄູ່ມືຢ່າງເປັນທາງການນີ້ຊ່ວຍໃຫ້ຄົນເຮັດວຽກຮຽນຮູ້ກ່ຽວກັບ:

## ເງິນຊົດເຊີຍການຫວ່າງງານ ແລະ ບໍລິການຟຣີ ເພື່ອຊ່ວຍໃຫ້ທ່ານຊອກຫາວຽກໃໝ່.



ທ່ານໄດ້ຮັບຄູ່ມືນີ້ເນື່ອງຈາກທ່ານໄດ້ສະໝັກຂໍຮັບເງິນຊົດເຊີຍການຫວ່າງງານ. ການບໍ່ມີວຽກເຮັດໃຫ້ເກີດຄວາມກົດດັນ. **ໃຊ້ຄູ່ມືນີ້ໃນການຮຽນຮູ້ວິທີ:**

- ຍື່ນຂໍເປັນ**ຜູ້ມີສິດໄດ້ຮັບຄວາມຊ່ວຍເຫຼືອ** ແລະມີສິດທີ່ຈະໄດ້ຮັບຄວາມຊ່ວຍເຫຼືອຕໍ່ໄປ
- ຂໍຮັບບໍລິການ**ຟຣີ** ເພື່ອຊ່ວຍໃຫ້ທ່ານກັບຄືນໄປເຮັດວຽກໄດ້ ແລະ
- **ຕິດຕໍ່**ກັບພວກເຮົາທາງອອນລາຍ, ທາງໂທລະສັບ ແລະດ້ວຍຕົນເອງ.

**ຖ້າທ່ານບໍ່ໄດ້ສະໝັກຂໍຮັບເງິນຊົດເຊີຍການຫວ່າງງານ...**
ອາດຈະມີບຸກຄົນອື່ນໃຊ້ຂໍ້ມູນປະຈໍາຕົວຂອງທ່ານ. ປົກປ້ອງຕົວທ່ານເອງ ແລະ ລາຍງານເລື່ອງນີ້ທັນທີ: ໄປທີ່ mass.gov/dua/fraud ຫຼື ໂທຫາພວກເຮົາທີ່ເບີ (617) 626-6800.

MASSACHUSETTS DEPARTMENT OF
**UNEMPLOYMENT ASSISTANCE**

*P2594 Unemployment Brochure-English-Rev. 05-21-25*

ສາລະບານ


ຈະເກີດຫຍັງຂຶ້ນຫຼັງຈາກທ່ານຍື່ນຂໍຮັບເງິນຊົດເຊີຍການຫວ່າງງານ?....3

ວິທີຄຳນວນຈຳນວນເງິນຊົດເຊີຍຕໍ່ອາທິດຂອງທ່ານ (WBA): ....4

ວິທີຄຳນວນຈຳນວນເງິນຊົດເຊີຍໂດຍໃຊ້ໄລຍະຖານຫຼັກ: .... 5

ຄຳຖາມກ່ຽວກັບເງິນຊົດເຊີຍການຫວ່າງງານຕໍ່ອາທິດ ....5

ທ່ານຕ້ອງຢັ້ງຢືນສິດໃນການໄດ້ຮັບເງິນຊົດເຊີຍໃນແຕ່ລະອາທິດ:....6

ທ່ານຕ້ອງແຈ້ງໃຫ້ພວກເຮົາຮູ້ກ່ຽວກັບການຊອກວຽກຂອງທ່ານ:....7

"ການຊອກວຽກ" ໝາຍຄວາມວ່າແນວໃດ? .... 8

ທ່ານຈະບໍ່ໄດ້ຮັບເງິນຊົດເຊີຍສຳລັບອາທິດທຳອິດທີ່ທ່ານຫວ່າງງານ:....8

ສູນອາຊີບ MassHireCareer Centers (MCCs): ....9

ທ່ານສາມາດໃຊ້ຊັບພະຍາກອນຟຣີຂອງ MCC ໄດ້ຕະຫຼອດເວລາ! .... 10

ສິ່ງສຳຄັນອື່ນໆທີ່ຄວນຮູ້: ແຈ້ງໃຫ້ພວກເຮົາຮູ້ເຖິງການປ່ຽນແປງຂໍ້ມູນການຕິດຕໍ່ຂອງທ່ານ . ....10

ສິ່ງທີ່ຕ້ອງເຮັດຖ້າ DUA ລະບຸວ່າທ່ານບໍ່ມີສິດໄດ້ຮັບເງິນຊົດເຊີຍການຫວ່າງງານ ຫຼືອະດີດນາຍຈ້າງບໍ່ເຫັນດີນຳວ່າທ່ານມີສິດ: ....12

ໃນຂະນະທີ່ທ່ານລໍຖ້າການໄຕ່ສວນຄະດີ ສິ່ງສຳຄັນແມ່ນທ່ານຕ້ອງສືບຕໍ່ຢັ້ງຢືນເພື່ອຮັບເງິນຊົດເຊີຍຕໍ່ໄປຖ້າທ່ານຍັງຫວ່າງງານ– ເຖິງແມ່ນວ່າທ່ານຈະໄດ້ຮັບແຈ້ງວ່າທ່ານບໍ່ມີສິດທີ່ຈະໄດ້ຮັບເງິນຊົດເຊີຍກໍ່ຕາມ. ຖ້າທ່ານໄດ້ຮັບເງິນຊົດເຊີຍຫຼັງການໄຕ່ສວນຄະດີ ທ່ານຈະໄດ້ຮັບເງິນສຳລັບອາທິດທີ່ທ່ານໄດ້ຮັບການຢັ້ງຢືນ:....12

ໄປເຂົ້າຮ່ວມການໄຕ່ສວນ. ຢ່າໄປຊ້າກວ່າເວລານັດໝາຍ! ....12

ຈະເປັນແນວໃດຖ້າຂ້າພະເຈົ້າບໍ່ເຫັນດີກັບຄຳຕັດສິນໃນການໄຕ່ສວນ? ....13

ຈະເກີດຫຍັງຂຶ້ນຖ້າພວກເຮົາຈ່າຍເງິນໃຫ້ທ່ານເກີນ? ....15

ວິທີຮ້ອງຂໍການຍົກເວັ້ນການຈ່າຍຄືນເງິນທີ່ຈ່າຍໃຫ້ເກີນ:....16

ຄ່າປັບໄໝເງິນທີ່ຈ່າຍໃຫ້ເກີນ ແລະດອກເບ້ຍ:....16

ຈະເຮັດແນວໃດຖ້າທ່ານຈຳເປັນຕ້ອງໄດ້ຮັບການຝຶກອົບຮົມເພື່ອຊອກຫາວຽກເຮັດ....17

ຂໍ້ມູນການຕິດຕໍ່ທີ່ອາດຈຳເປັນສຳລັບທ່ານ: .... 19

ຖ້າທ່ານເວົ້າພາສາອັງກິດບໍ່ຖະນັດ ກະລຸນາອ່ານປະກາດສະບັບນີ້: .... 21

## ຈະເກີດຫຍັງຂຶ້ນຫຼັງຈາກທ່ານຍື່ນຂໍຮັບເງິນຊົດເຊີຍການຫວ່າງງານ?

ພວກເຮົາດຳເນີນການກັບຄຳຮ້ອງສ່ວນໃຫຍ່ພາຍໃນ 3-4 ອາທິດ.
ຕໍ່ໄປນີ້ແມ່ນຂັ້ນຕອນທີ່ພວກເຮົາປະຕິບັດຕາມ ຫຼັງຈາກທີ່ທ່ານຍື່ນຂໍເງິນຊົດເຊີຍການຫວ່າງງານ:

| | |
|---|---|
| **ພວກເຮົາຕິດຕໍ່ນາຍຈ້າງຂອງທ່ານ**<br>*ໜ້າ 3 ຂອງຄູ່ມືນີ້* ອະທິບາຍວິທີທີ່ພວກເຮົາຄຳນວນເງິນຊົດເຊີຍ | ພວກເຮົາຂໍຂໍ້ມູນຈາກນາຍຈ້າງທັງໝົດທີ່ທ່ານໄດ້ລະບຸໄວ້ໃນການຍື່ນຄຳຮ້ອງກ່ຽວກັບຄ່າຈ້າງໃນອະດີດຂອງທ່ານ ແລະສາເຫດທີ່ທ່ານຢຸດເຮັດວຽກຢູ່ທີ່ນັ້ນ. ຖ້ານາຍຈ້າງບໍ່ຕອບສະໜອງພາຍໃນ **10 ວັນ** ພວກເຮົາອາດຈະຕິດຕໍ່ທ່ານເພື່ອຂໍຄຳຕອບສຳລັບຂໍ້ມູນນີ້.<br>ພວກເຮົາຈະກວດສອບຄ່າຈ້າງ ແລະຂໍ້ມູນການຈ້າງງານຂອງທ່ານເພື່ອພິຈາລະນາວ່າທ່ານໄດ້ຮັບຄ່າຈ້າງພຽງພໍທີ່ຈະມີສິດ ໄດ້ຮັບເງິນຊ່ວຍເຫຼືອ ຫຼື ບໍ່ ແລະດົນປານໃດ. ພວກເຮົາຈະສົ່ງຜົນ "ການພິຈາລະນາສິດດ້ານການເງິນ" ໃຫ້ທ່ານພ້ອມກັບ ຂໍ້ມູນນີ້ ກ່ອນທີ່ພວກເຮົາຈະຕັດສິນໃຈວ່າທ່ານມີສິດໄດ້ຮັບ ເງິນຊົດເຊີຍການຫວ່າງງານ ຫຼື ບໍ່. |
| **ພວກເຮົາອາດຈະສົ່ງຄຳຖາມຕິດຕາມເພື່ອສອບຖາມທ່ານ** | ພວກເຮົາຈະດຳເນີນການນີ້ຖ້າພວກເຮົາຕ້ອງການຂໍ້ມູນເພີ່ມເຕີມເພື່ອຕັດສິນໃຈກ່ຽວກັບການຂໍຮັບເງິນຊົດເຊີຍຂອງທ່ານ. ກະລຸນາຕອບຄຳຖາມຕິດຕາມຜົນພາຍໃນກຳນົດເວລາ. |
| **ພວກເຮົາກວດສອບຂໍ້ມູນກ່ຽວກັບສາເຫດທີ່ທ່ານຢຸດເຮັດວຽກ** | ພວກເຮົາຈະກວດສອບເຫດຜົນທີ່ທ່ານຢຸດເຮັດວຽກເພື່ອຕັດສິນໃຈວ່າທ່ານມີສິດໄດ້ຮັບເງິນຊົດເຊີຍການຫວ່າງງານ ຫຼື ບໍ່. |
| **ພວກເຮົາແຈ້ງຜົນການພິຈາລະນາສິດໃຫ້ທ່ານຮູ້** | ຜົນການພິຈາລະນາຂອງພວກເຮົາອາດຈະລະບຸວ່າ:<br>■ ***ທ່ານມີສິດໄດ້ຮັບເງິນຊົດເຊີຍ.*** ທ່ານຈະໄດ້ຮັບເງິນຊົດເຊີຍໂດຍການຝາກເຂົ້າບັນຊີທະນາຄານຂອງທ່ານໂດຍກົງ ຫຼື ຜ່ານບັດເດບິດ DUA (ທ່ານເປັນຜູ້ກຳນົດ).<br>■ **ທ່ານບໍ່ມີສິດໄດ້ຮັບເງິນຊົດເຊີຍ.** ວໍຖ້າຈົດໝາຍໃນບັນຊີອອນລາຍ DUA ຂອງທ່ານ ຫຼື ທາງໄປສະນີ ເຊິ່ງອະທິບາຍວ່າເປັນຫຍັງພວກເຮົາຈຶ່ງຕັດສິນໃຈວ່າທ່ານບໍ່ມີສິດ. |

| | |
|---|---|
| **ທ່ານອາດຈະບໍ່ເຫັນດີນຳກັບການຕັດສິນໃຈຂອງພວກເຮົາ** | ຖ້າທ່ານຄິດວ່າການຕັດສິນໃຈຂອງພວກເຮົາກ່ຽວກັບເງິນຊົດເຊີຍຂອງທ່ານບໍ່ຖືກຕ້ອງ ທ່ານສາມາດຮ້ອງຂໍການໄຕ່ສວນໄດ້ພາຍໃນ 10 ວັນ. ໜັງສືແຈ້ງການທີ່ສົ່ງເຖິງທ່ານຈະລະບຸວິທີການອຸທອນ. |
| **ຂໍ້ກຳນົດອື່ນໆດ້ານຄຸນສົມບັດ** | ເຖິງແມ່ນວ່າທ່ານຈະມີສິດໄດ້ຮັບເງິນຊົດເຊີຍ ທ່ານຍັງຄົງຕ້ອງປະຕິບັດຕາມຂໍ້ກຳນົດອື່ນໆຂອງ DUA ໃນແຕ່ລະອາທິດທີ່ທ່ານຮ້ອງຂໍຮັບເງິນຊົດເຊີຍ. *ເບິ່ງໜ້າ 6.* |

## ວິທີຄຳນວນຈຳນວນເງິນຊົດເຊີຍຕໍ່ອາທິດຂອງທ່ານ (WBA):

ຜູ້ຍື່ນຄຳຮ້ອງທີ່ມີສິດຈະໄດ້ຮັບເງິນຊົດເຊີຍການຫວ່າງງານໃນແຕ່ລະອາທິດ. ຈຳນວນເງິນທີ່ທ່ານຈະໄດ້ຮັບໃນແຕ່ລະອາທິດແມ່ນເອີ້ນວ່າ "ຈຳນວນເງິນຊົດເຊີຍຕໍ່ອາທິດ" ຫຼື WBA ຂອງທ່ານ.

WBA ຂອງທ່ານແມ່ນປະມານ 50% ຂອງຄ່າຈ້າງສະເລ່ຍຕໍ່ອາທິດຂອງທ່ານຈາກ 4 ໄຕມາດປະຕິທິນສຸດທ້າຍ ກ່ອນທີ່ທ່ານຈະຍື່ນຂໍຮັບເງິນຊົດເຊີຍ (ສູງສຸດຕາມຈຳນວນທີ່ກົດໝາຍກຳນົດ).

ໄຕມາດແມ່ນໄລຍະເວລາສາມເດືອນຕາມປີປະຕິທິນ. ໄຕມາດ 1 ແມ່ນວັນທີ 1 ມັງກອນ-31 ມີນາ. ໄຕມາດ 2 ແມ່ນວັນທີ 1 ເມສາ-30 ມິຖຸນາ. ໄຕມາດ 3 ແມ່ນວັນທີ 1 ກໍລະກົດ-ວັນທີ 30 ກັນຍາ. ໄຕມາດ 4 ແມ່ນວັນທີ 1 ຕຸລາ-ວັນທີ 31 ທັນວາ.

4 ໄຕມາດສຸດທ້າຍທີ່ຄົບຕາມປະຕິທິນ ກ່ອນທີ່ທ່ານຈະຍື່ນເອກະສານແມ່ນເອີ້ນວ່າ**ໄລຍະຖານຫຼັກ**. ຕົວຢ່າງ ຖ້າທ່ານບໍ່ໄດ້ເຮັດວຽກໃນວັນທີ 30 ເດືອນເມສາ, 4 ໄຕມາດສຸດທ້າຍທີ່ຄົບຖ້ວນຈະເປັນໄຕມາດ 1 ຂອງປີປັດຈຸບັນ, ແລະໄຕມາດ 4, 3 ແລະ 2 ຂອງປີກ່ອນໜ້ານັ້ນ.

ຖ້າທ່ານບໍ່ມີສິດຕາມເກນລາຍໄດ້ຈາກໄລຍະຖານຫຼັກ ພວກເຮົາຈະຮ້ອງຂໍຂໍ້ມູນຄ່າຈ້າງຈາກ 3 ໄຕມາດສຸດທ້າຍທີ່ຄົບຕາມປະຕິທິນ ບວກກັບໄຕມາດປັດຈຸບັນຈົນເຖິງວັນທີທີ່ທ່ານຍື່ນຄຳຮ້ອງ (ໄລຍະເວລານີ້ເອີ້ນວ່າ**ໄລຍະຖານສຳຮອງ**ຂອງທ່ານ.) ຖ້າທ່ານມີສິດພາຍໃຕ້ໄລຍະຖານສຳຮອງ ພວກເຮົາຈະໃຊ້ຄ່າຈ້າງເຫຼົ່ານັ້ນໂດຍອັດຕະໂນມັດ. ຕາມຕົວຢ່າງທີ່ໃຊ້ຂ້າງເທິງ ທາງ DUA ຈະພິຈາລະນາຄ່າຈ້າງແຕ່ວັນທີ 1-30 ເມສາ, ແລະໄຕມາດ 1 ຂອງປີປັດຈຸບັນ, ແລະໄຕມາດ 4 ແລະ 3 ຂອງປີກ່ອນໜ້ານັ້ນ.

ທ່ານສາມາດຮ້ອງຂໍໃຫ້ພວກເຮົາໃຊ້ໄລຍະຖານສຳຮອງໄດ້ເຊັ່ນກັນຖ້າທ່ານສາມາດສະແດງໃຫ້ເຫັນວ່າການໃຊ້ວິທີນີ້ຈະຊ່ວຍໃຫ້ທ່ານໄດ້ຮັບເງິນຊົດເຊີນເພີ່ມຂຶ້ນຢ່າງໜ້ອຍ 10%.

## ວິທີຄຳນວນເງິນຊົດເຊີຍໂດຍໃຊ້ໄລຍະຖານຫຼັກ:

**ຕົວຢ່າງ:**

**ຂັ້ນຕອນທີ 1:** ລະບຸຄ່າ ຈ້າງ ທັງ ຫມົດ ຈາກນາຍ ຈ້າງ ທັງ ຫມົດ ຂອງ ທ່ານ ໃນ ໄລ ຍະ ຖານ ສຳ ລັບ 4 ໄຕ ມາດ ສຸດ ທ້າຍ ທີ່ ທ່ານ ເຮັດ ວຽກ.

| ໄຕມາດ 1 | ໄຕມາດ 2 | ໄຕມາດ 3 | ໄຕມາດ 4 |
|---|---|---|---|
| $7,800 | $7,800 | $8,840 | $10,000 |

**ຂັ້ນຕອນທີ 2:** ບວກຄ່າຈ້າງຈາກ 2 ໄຕມາດທີ່ມີລາຍໄດ້ສູງສຸດຂອງທ່ານ. ໃນຕົວຢ່າງນີ້, ໄຕມາດ 3 ແລະ 4 ແມ່ນໄຕມາດທີ່ມີລາຍໄດ້ສູງສຸດ.

$8,840+10,000
= **$18,840**

**ຂັ້ນຕອນທີ 3:** ຫານຜົນລວມຈາກຂັ້ນຕອນທີ 2 ດ້ວຍ 26. (ມີ 26 ອາທິດໃນ 2 ໄຕມາດ.) ໃນຕົວຢ່າງນີ້, ໄຕມາດ 3 ແລະ 4 ລວມກັນໄດ້ $18,840. ຫານຕົວເລກນີ້ດ້ວຍ 26 ເພື່ອໃຫ້ໄດ້ຄ່າຈ້າງສະເລ່ຍຕໍ່ອາທິດຂອງທ່ານ ເຊິ່ງເປັນ $724.61.

$18,840 ÷ 26
= **$724.61**

**ໝາຍເຫດ:** ຖ້າທ່ານເຮັດວຽກພຽງ 1 ຫຼື 2 ໄຕມາດ ໃຫ້ໃຊ້ໄຕມາດທີ່ໄດ້ຄ່າຈ້າງສູງສຸດ ແລ້ວຫານຈຳນວນນັ້ນດ້ວຍ 13. (ໜຶ່ງໄຕມາດມີ 13 ອາທິດ).

**ຂັ້ນຕອນທີ 4:** ຫານ**ຄ່າຈ້າງສະເລ່ຍຕໍ່ອາທິດ**ດ້ວຍ 2. ຈາກນັ້ນ ໃຫ້ປັດຈຳນວນດັ່ງກ່າວເປັນຈຳນວນເຕັມທີ່ໃກ້ຄຽງທີ່ສຸດ. ເຊິ່ງທ່ານຈະໄດ້ $362 ເປັນຈຳນວນເງິນຊົດເຊີຍຕໍ່ອາທິດ (WBA).

$724.61÷2
= **$362.30**

ຖ້າທ່ານມີລູກທີ່ຕ້ອງລ້ຽງດູ ທ່ານອາດຈະມີສິດໄດ້ຮັບເງິນເພີ່ມເຕີມ $25 ຕໍ່ອາທິດສຳລັບລູກແຕ່ລະຄົນທີ່ຕ້ອງລ້ຽງດູ.

## ຄຳຖາມກ່ຽວກັບເງິນຊົດເຊີຍການຫວ່າງງານຕໍ່ອາທິດ:

ໄປທີ່: mass.gov/info-details/how-your-unemployment-benefits-are-determined.

## ວິທີຄຳນວນຈຳນວນເງິນຊົດເຊີຍສູງສຸດຂອງທ່ານ (MBA):

**ຈຳນວນເງິນຊົດເຊີຍສູງສຸດ**ຂອງທ່ານ (MBA) ແມ່ນຈຳນວນເງິນທັງໝົດທີ່ທ່ານຈະໄດ້ຮັບໃນລະຫວ່າງປີສິດປະໂຫຍດ. ເງິນ MBA ຂອງທ່ານແມ່ນຈຳນວນໃດໜຶ່ງທີ່ມີຈຳນວນ**ໜ້ອຍກວ່າ**:

- ✓ ຈຳນວນເງິນຊົດເຊີຍຂອງທ່ານຕໍ່ອາທິດ x 30 ຫຼື
- ✓ ຄ່າຈ້າງໄລຍະຖານລວມທັງໝົດຂອງທ່ານ x .36

ທ່ານສາມາດຂໍຮັບເງິນເພີ່ມໄດ້ອີກ $25.00 ຕໍ່ອາທິດ ສໍາລັບລູກແຕ່ລະຄົນທີ່ຕ້ອງລ້ຽງດູ.
ທ່ານຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ຫຼື ຄ່າໃຊ້ຈ່າຍຫຼັກໃນການລ້ຽງດູເດັກນ້ອຍ.
ເງິນຊ່ວຍເຫຼືອຈະໃຊ້ໄດ້ໃນກໍລະນີທີ່ທ່ານຕ້ອງຮັບຜິດຊອບລ້ຽງດູເດັກນ້ອຍຕາມກົດໝາຍເທົ່ານັ້ນ.
ທ່ານອາດຈະເປັນພໍ່ຫຼືແມ່, ພໍ່ລ້ຽງຫຼືແມ່ລ້ຽງ ຫຼືຜູ້ປົກຄອງຕາມກົດໝາຍຂອງເດັກນ້ອຍ.
ຜູ້ໃຫຍ່ຫຼາຍຄົນບໍ່ສາມາດຂໍຮັບເງິນຊ່ວຍເຫຼືອສໍາລັບເດັກນ້ອຍຄົນດຽວກັນໃນຊ່ວງເວລາດຽວກັນໄດ້.

## ທ່ານຕ້ອງຢັ້ງຢືນສິດໃນການໄດ້ຮັບເງິນຊົດເຊີຍໃນແຕ່ລະອາທິດ:

**ທ່ານຈະບໍ່ໄດ້ຮັບເງິນຊົດເຊີຍການຫວ່າງງານ ເວັ້ນເສຍແຕ່ວ່າທ່ານຈະຮ້ອງຂໍ ຫຼື "ຢັ້ງຢືນສິດ" ໃນແຕ່ລະອາທິດທີ່ທ່ານບໍ່ມີວຽກເຮັດ. ທ່ານສາມາດຢັ້ງຢືນສິດເພື່ອຂໍຮັບເງິນຊົດເຊີຍທາງອອນລາຍ ຫຼືໂທໄປທີ່ສາຍ DUA TeleCert ອັດຕະໂນມັດ ເບີ (617) 626-6338.**
**ສິ່ງສໍາຄັນແມ່ນທ່ານຕ້ອງຢັ້ງຢືນສິດທຸກອາທິດໃນຊ່ວງທີ່ທ່ານບໍ່ມີວຽກເຮັດ.**

ທ່ານສາມາດຢັ້ງຢືນສິດເພື່ອຂໍຮັບເງິນຊົດເຊີຍຫຼັງຈາກອາທິດນັ້ນສິ້ນສຸດລົງ.
ອາທິດໃດໜຶ່ງຈະເລີ່ມຕົ້ນໃນວັນອາທິດ ແລະສິ້ນສຸດລົງໃນວັນເສົາຕໍ່ມາ.
ເຊິ່ງໝາຍຄວາມວ່າທ່ານສາມາດຢັ້ງຢືນສິດໃນເວລາໃດກໍ່ໄດ້
ເລີ່ມຕັ້ງແຕ່ວັນອາທິດຂອງອາທິດກ່ອນໜ້ານັ້ນ

## ຂໍ້ມູນສໍາຄັນ:

ທ່ານຄວນຢັ້ງຢືນສິດເພື່ອຂໍຮັບເງິນຊົດເຊີຍໃຫ້ໄວທີ່ສຸດສໍາລັບອາທິດທີ່ທ່ານຕ້ອງການຂໍຮັບເງິນຊົດເຊີຍ.
ໂປດຊາບວ່າວັນທໍາອິດທີ່ທ່ານຈະຢັ້ງຢືນສິດໄດ້ແມ່ນວັນອາທິດຫຼັງຈາກອາທິດທີ່ທ່ານຕ້ອງການຮ້ອງຂໍຮັບເງິນຊົດເຊີຍ. ຖ້າທ່ານບໍ່ຢັ້ງຢືນສິດເປັນເວລາສາມອາທິດຕິດຕໍ່ກັນ ທ່ານຈະບໍ່ໄດ້ຮັບເງິນຊົດເຊີຍຂອງທ່ານ. ຖ້າທ່ານບໍ່ມີວຽກເຮັດ ແລະຕ້ອງການຂໍຮັບເງິນຊົດເຊີຍສໍາລັບອາທິດນັ້ນ ທ່ານຈະຕ້ອງຍື່ນຄໍາຮ້ອງໃໝ່ ແລະອະທິບາຍເຫດຜົນທີ່ທ່ານບໍ່ໄດ້ຢັ້ງຢືນສິດເພື່ອຂໍຮັບເງິນຊົດເຊີຍຕາມກໍານົດ.
ພວກເຮົາຈະກວດສອບເຫດຜົນເຫຼົ່ານັ້ນເພື່ອພິຈາລະນາວ່າທ່ານຈະມີສິດໄດ້ຮັບເງິນຊົດເຊີຍສໍາລັບອາທິດດັ່ງກ່າວ ຫຼື ບໍ່.

## ທ່ານຈະບໍ່ໄດ້ຮັບເງິນຊົດເຊີຍສໍາລັບອາທິດທໍາອິດທີ່ທ່ານຫວ່າງງານ:

ຫຼັງຈາກທີ່ທ່ານກາຍເປັນຄົນຫວ່າງງານ ແລະໄດ້ຍື່ນຄໍາຮ້ອງຂໍຮັບເງິນຊົດເຊີຍແລ້ວ ໃຫ້ຢັ້ງຢືນການໄດ້ຮັບເງິນຊົດເຊີຍສໍາລັບອາທິດທີ່ມີສິດຈະໄດ້ຮັບຄວາມຊ່ວຍເຫຼືອໃຫ້ໄວທີ່ສຸດ ຍ້ອນວ່າທ່ານຈະບໍ່ໄດ້ຮັບເງິນຊົດເຊີຍສໍາລັບອາທິດນັ້ນ. ອາທິດນີ້ເອີ້ນວ່າ "ອາທິດລໍຖ້າ" ແລະເຖິງແມ່ນວ່າທ່ານຈະຕ້ອງຢັ້ງຢືນການໄດ້ຮັບເງິນຊົດເຊີຍສໍາລັບອາທິດນັ້ນ

ແລະກົງຕາມຂໍ້ກຳນົດໃນການມີສິດໄດ້ຮັບເງິນຊົດເຊີຍ ທ່ານຈະບໍ່ໄດ້ຮັບເງິນສຳລັບອາທິດນັ້ນ. ໂປດຊາບວ່າທ່ານສາມາດຍັ້ງຢືນການໄດ້ຮັບເງິນຊົດເຊີຍໃນອາທິດທຳອິດໄດ້ໄວທີ່ສຸດໃນວັນອາທິດຖັດຈາກອາທິດນັ້ນທັນທີ ເມື່ອທ່ານຜ່ານ "ອາທິດລໍຖ້າ" ແລ້ວ ທ່ານຈະໄດ້ຮັບເງິນຊົດເຊີຍສຳລັບອາທິດຕໍ່ໄປທີ່ທ່ານຍັ້ງຢືນວ່າມີຄຸນສົມບັດກົງຕາມຂໍ້ກຳນົດທັງໝົດ.

- **ທາງອອນລາຍ** ແມ່ນວິທີທີ່ງ່າຍທີ່ສຸດໃນການຍັ້ງຢືນ **ຫຼື**
- ໂທໄປທີ່ TeleCert: **(617) 626-6338** ໄດ້ທຸກມື້)

### ຄຳຖາມທີ່ທ່ານຕ້ອງຕອບເມື່ອຍັ້ງຢືນສິດ:

**ທ່ານຕ້ອງຍັ້ງຢືນສິດທີ່ຈະໄດ້ຮັບເງິນຊົດເຊີຍທຸກອາທິດວ່າທ່ານຫວ່າງງານແລະປະຕິບັດຕາມຂໍ້ກຳນົດດ້ານຄຸນສົມບັດ ເຖິງແມ່ນວ່າທ່ານຈະຍັງບໍ່ໄດ້ຮັບເງິນຊົດເຊີຍການຫວ່າງງານກໍ່ຕາມ. ທຸກຄັ້ງທີ່ທ່ານຍັ້ງຢືນ ພວກເຮົາຈະສອບຖາມວ່າທ່ານກຳລັງຊອກຫາວຽກ, ທ່ານສາມາດຮັບວຽກທີ່ສະເໜີໃຫ້ທ່ານໄດ້ ຫຼື ບໍ່ ແລະທ່ານມີຄວາມສາມາດທາງຮ່າງກາຍແລະຈິດໃຈໃນການເຮັດວຽກ ຫຼື ບໍ່.**

**ພວກເຮົາຈະສອບຖາມເຊັ່ນກັນກ່ຽວກັບສະຖານະການຈ້າງງານໃນປັດຈຸບັນຂອງທ່ານ ແລະຄ່າຈ້າງໃດໆທີ່ທ່ານອາດຈະໄດ້ຮັບ.**

### ທ່ານຕ້ອງແຈ້ງໃຫ້ພວກເຮົາຮູ້ກ່ຽວກັບການຊອກວຽກຂອງທ່ານ:



ທ່ານຕ້ອງຊອກຫາວຽກເຮັດທຸກອາທິດທີ່ທ່ານຮ້ອງຂໍຮັບເງິນຊົດເຊີຍ ເລີ່ມຕັ້ງແຕ່ເມື່ອທ່ານຍື່ນຄຳຮ້ອງຄັ້ງທຳອິດ.

ທ່ານຈະຕ້ອງແຈ້ງໃຫ້ພວກເຮົາຮູ້ກ່ຽວກັບກິດຈະກຳການຊອກວຽກຢ່າງໜ້ອຍສາມກິດຈະກຳທີ່ທ່ານໄດ້ເຮັດໃນແຕ່ລະອາທິດທີ່ທ່ານຕ້ອງການຮັບເງິນຊົດເຊີຍ. ກວດສອບໃຫ້ແນ່ໃຈວ່າທ່ານເລີ່ມຊອກຫາວຽກທັນທີທີ່ຫວ່າງງານ:

ພວກ ເຮົາ ບໍ່ ສາ ມາດ ຈ່າຍ ເງິນຊົດເຊີຍ ໃຫ້ ທ່ານ ສຳ ລັບ ອາ ທິດ ໃດ ໜຶ່ງ ທີ່ ທ່ານ ບໍ່ ໄດ້ ຊອກ ຫາ ວຽກ ເຮັດ ເວັ້ນ ເສຍ ແຕ່ ວ່າຈະມີ ຂໍ້ ຍົກ ເວັ້ນ ທີ່ ກ່ຽວຂ້ອງກັບ ທ່ານ. ຂໍ້ຍົກເວັ້ນແມ່ນມີຈຳກັດ, ແຕ່ໃນກໍລະນີ ສ່ວນຫຼາຍ, ພວກເຮົາຈະບໍ່ຖາມວ່າທ່ານໄດ້ຊອກຫາວຽກເຮັດ ຫຼື ບໍ່ ຖ້າທ່ານເຂົ້າເກນຢູ່ໃນຂໍ້ຍົກເວັ້ນ ຂໍ້ໃດໜຶ່ງເຫຼົ່ານີ້, ເຊັ່ນການເຂົ້າຮ່ວມການຝຶກອົບຮົມທີ່ໄດ້ຮັບອະນຸມັດຈາກ DUA. ສາມາດເບິ່ງຂໍ້ມູນເພີ່ມເຕີມກ່ຽວກັບການຝຶກອົບຮົມທີ່ໄດ້ຮັບອະນຸມັດຈາກ DUA ໄດ້ທີ່ໜ້າ 15 ຂອງປຶ້ມຫົວນີ້ ຫຼື ໂດຍເຂົ້າໄປທີ່ [mass.gov/training-opportunities-program-top](mass.gov/training-opportunities-program-top).

ຈົດບັນທຶກການຊອກຫາວຽກທັງໝົດຂອງທ່ານ.

ພວກເຮົາຈະຮ້ອງຂໍໃຫ້ທ່ານໃຫ້ຂໍ້ມູນນີ້ໃນລະຫວ່າງຂັ້ນຕອນການຢັ້ງຢືນປະຈຳອາທິດ.

## "ການຊອກວຽກ" ໝາຍຄວາມວ່າແນວໃດ?



ສຳລັບທຸກອາທິດທີ່ທ່ານຂໍຮັບເງິນຊົດເຊີຍ ທ່ານຕ້ອງເຮັດ "ກິດຈະກຳຊອກຫາວຽກ" ຢ່າງໜ້ອຍ 3 ກິດຈະກຳ. ຕົວຢ່າງ, ທ່ານສາມາດຊອກຫາວຽກ:

- ທາງອອນລາຍ,
- ດ້ວຍຕົນເອງ ເຊັ່ນ: ການສຳພາດງານ ຫຼື ງານນັດພົບແຮງງານ ແລະ
- ໂດຍການສົ່ງໃບສະໝັກວຽກ

**ເບິ່ງວ່າສິ່ງໃດແດ່ທີ່ຖືເປັນກິດຈະກຳການຊອກຫາວຽກໄດ້ທີ່: mass.gov/info-details/work-search-examples.**

**ທ່ານຕ້ອງບອກພວກເຮົາວ່າທ່ານສາມາດເຮັດວຽກໄດ້.**
ທ່ານຕ້ອງມີສະພາບຮ່າງກາຍແລະຈິດໃຈທີ່ແຂງແຮງພໍທີ່ຈະເຮັດວຽກໄດ້. ເຊິ່ງໝາຍຄວາມວ່າທ່ານຕ້ອງບໍ່ມີພາວະທີ່ເປັນອຸປະສັກໃຫ້ທ່ານບໍ່ສາມາດເຮັດວຽກໄດ້. ຖ້າທ່ານຕ້ອງການການອຳນວຍຄວາມສະດວກໃນການເຮັດວຽກ ນັ້ນບໍ່ໄດ້ໝາຍຄວາມໂດຍອັດຕະໂນມັດວ່າທ່ານຈະບໍ່ສາມາດເຮັດວຽກໄດ້. ນອກຈາກນີ້ ທ່ານບໍ່ຈຳເປັນຕ້ອງສາມາດເຮັດວຽກປະຈຳໄດ້ເທົ່ານັ້ນ. ຖ້າທ່ານສາມາດເຮັດວຽກປະເພດອື່ນໆໄດ້ ທ່ານກໍ່ສາມາດເຮັດວຽກໄດ້.

ທ່ານມີສິດໄດ້ຮັບເງິນຊົດເຊີຍສຳລັບອາທິດທີ່ມີ "ການເຈັບປ່ວຍທີ່ໄດ້ຮັບອະນຸມັດ" ເປັນເວລາສາມອາທິດຕໍ່ການຮ້ອງຂໍເງິນຊົດເຊີຍໜຶ່ງຄັ້ງ. ເຊິ່ງໝາຍຄວາມວ່າຖ້າທ່ານບໍ່ສາມາດເຮັດວຽກໄດ້ເພາະວ່າທ່ານເຈັບປ່ວຍ ຫຼືມີຜູ້ເສຍຊີວິດໃນຄອບຄົວ ທ່ານອາດຈະສາມາດຮັບເງິນຊົດເຊີຍໄດ້ເຖິງສາມອາທິດ ໂດຍບໍ່ຈຳເປັນຕ້ອງໃຊ້ອາທິດເຫຼົ່ານີ້ຮ່ວມກັນ. ພວກເຮົາຈະສອບຖາມທ່ານກ່ຽວກັບເລື່ອງນີ້ຖ້າທ່ານແຈ້ງພວກເຮົາວ່າທ່ານບໍ່ສາມາດເຮັດວຽກໄດ້. ທ່ານຕ້ອງຜ່ານ 'ອາທິດລໍຖ້າ' ແລ້ວຈຶ່ງຈະມີສິດໄດ້ຮັບເງິນຊົດເຊີຍຈາກ ອາທິດ "ການເຈັບປ່ວຍທີ່ໄດ້ຮັບອະນຸມັດ".

**ທ່ານຕ້ອງແຈ້ງພວກເຮົາວ່າທ່ານຫວ່າງພ້ອມເຮັດວຽກ.**
ທ່ານຕ້ອງສາມາດຮັບເຮັດວຽກໄດ້ຖ້າມີການສະເໜີວຽກໃຫ້ທ່ານ. ແຕ່ທ່ານຈະບໍ່ຫວ່າງພ້ອມຖ້າທ່ານໃຊ້ເວລາໄປກັບເລື່ອງຕ່າງໆ ເຊັ່ນ: ການດູແລສະມາຊິກໃນຄອບຄົວເຕັມເວລາ

ຫຼືທ່ານໃຊ້ເວລາສ່ວນຫຼາຍໃນການເລີ່ມປະກອບທຸລະກິດຂອງທ່ານເອງ.

ອາດຈະຖືວ່າທ່ານບໍ່ຫວ່າງພ້ອມທີ່ຈະສາມາດຮັບວຽກໄດ້ ຖ້າທ່ານບໍ່ມີລົດໂດຍສານໄປບ່ອນເຮັດວຽກ ແລະ ບໍ່ສາມາດເຮັດວຽກຈາກບ້ານໄດ້.

ກິດ ຈະ ກຳ ຊອກ ຫາ ວຽກ, ຄວາມ ສາ ມາດ ແລະ ຄວາມຫວ່າງພ້ອມ ຂອງ ທ່ານ ອາດ ຈະ ແຕກ ຕ່າງ ກັນໃນແຕ່ລະ ອາ ທິດ. ຖ້າທ່ານບໍ່ປະຕິບັດຕາມຂໍ້ກຳນົດທັງໝົດພາຍໃນອາທິດນັ້ນ ທ່ານຍັງສາມາດປະຕິບັດຕາມຂໍ້ກຳນົດໄດ້ໃນອາທິດຕໍ່ມາ.

## ສູນອາຊີບ MassHire Career Centers (MCCs):



ສູນ MassHire Career Centers (MCCs) ໃຫ້ບໍລິການສຳມະນາ, ການປະຊຸມປະຕິບັດການ ແລະໂປແກມຝຶກອົບຮົມ**ຟຣີ**ທີ່ຊ່ວຍໃຫ້ຜູ້ປະກັນຕົນຊອກຫາວຽກໃໝ່. ກິດຈະກຳ MCC ຂອງທ່ານຍັງນັບລວມເປັນຂໍ້ກຳນົດໃນການຊອກຫາວຽກເຊັ່ນກັນ.

ຜູ້ຍື່ນຄຳຮ້ອງກັບສູນ MassHire (MCCs) **ຕ້ອງ**ດຳເນີນກິດຈະກຳ MCC ບາງຢ່າງ ທ່ານຕ້ອງດຳເນີນກິດຈະກຳເຫຼົ່ານີ້ໃຫ້ສຳເລັດພາຍໃນກຳນົດເວລາເພື່ອໃຫ້ມີສິດໄດ້ຮັບເງິນຊົດເຊີຍ ທ່ານສາມາດໃຊ້ຊັບພະຍາກອນ MCC ຟຣີອື່ນໆໄດ້ຕະຫຼອດເວລາເຊັ່ນກັນ.

## ຜູ້ຍື່ນຄຳຮ້ອງຕ້ອງລົງທະບຽນໃນໂປແກມການຈ້າງງານໃໝ່ (RESEA).

ທ່ານ*ຕ້ອງ*ເຂົ້າຮ່ວມໃນໂປແກມ RESEA (ບໍລິການຈ້າງງານໃຫມ່ແລະການປະເມີນການມີສິດໄດ້ຮັບຄວາມຊ່ວຍເຫຼືອ). ພວກເຮົາຈະສົ່ງໜັງສືແຈ້ງການໃຫ້ທ່ານທັນທີຫຼັງຈາກການຈ່າຍເງິນໃຫ້ທ່ານຄັ້ງທຳອິດ ໂດຍແຈ້ງໃຫ້ທ່ານຮູ້ວິທີລົງທະບຽນໃນ RESEA ແລະກຳນົດເວລາ. ຂໍ້ກຳນົດຂອງໂປແກມ RESEA ມີສອງພາກສ່ວນ:

- ເຂົ້າຮ່ວມການປະຖົມນິເທດ
- ເຂົ້າຮ່ວມສຳມະນາ RESEA. **ຄຳເຕືອນ!** ທ່ານຕ້ອງເຂົ້າຮ່ວມໂປແກມໃຫ້ສຳເລັດພາຍໃນກຳນົດເວລາ ຖ້າບໍ່ດັ່ງນັ້ນ ທ່ານອາດຈະບໍ່ໄດ້ຮັບເງິນຊົດເຊີຍການຫວ່າງງານ. ກຳນົດເວລາຈະຢູ່ໃນ *ໜັງສືແຈ້ງການ RESEA ຂອງທ່ານ*.

ຊອກຫາສູນອາຊີບ MassHire ໃກ້ທ່ານໄດ້ທີ່: mass.gov/careercenters.

ຮຽນຮູ້ເພີ່ມເຕີມກ່ຽວກັບໂປແກມທີ່ກຳນົດໄດ້ທີ່: mass.gov/guides/your-rights-and-responsibilities-as-a-claimant.

## ທ່ານສາມາດໃຊ້ສູນພະຍາກອນຟຣີຂອງ MCC ໄດ້ຕະຫຼອດເວລາ!

ມີເຈົ້າໜ້າທີ່ຂອງ MCC, ສູນພະຍາກອນ ແລະໂປແກມຕ່າງໆໃຫ້ເພື່ອ*ຊ່ວຍເຫຼືອທ່ານ!* ທ່ານສາມາດ:

- ✓ ໄປພົບປະກັບຜູ້ໃຫ້ຄຳປຶກສາດ້ານອາຊີບຂອງ MCC ແລະໝູ່ເພື່ອນເພື່ອຮັບຄຳແນະນຳກ່ຽວກັບວິທີຊອກຫາວຽກ.
- ✓ ເຂົ້າຮ່ວມການປະຊຸມປະຕິບັດການເພື່ອເພີ່ມທັກສະຂອງທ່ານໃນການຊອກຫາວຽກ ເຊັ່ນ: ການສຳພາດ, ການສ້າງເຄືອຂ່າຍ ແລະການຂຽນຊີວະປະຫວັດຫຍໍ້ ແລະຈົດໝາຍສະໝັກງານ.
- ✓ ໄດ້ຮັບຄວາມຊ່ວຍເຫຼືອໃນການວາງແຜນອາຊີບ ແລະຂໍ້ມູນກ່ຽວກັບວຽກ, ອາຊີບ ແລະທັກສະທີ່ເປັນທີ່ຕ້ອງການສູງ.
- ✓ ເຂົ້າເຖິງລາຍການຕຳແໜ່ງງານທີ່ເປີດຮັບສະໝັກ ລະດັບທ້ອງຖິ່ນ, ລະດັບລັດ ແລະລະດັບຊາດ
- ✓ ໃຊ້ສູນພະຍາກອນຟຣີຂອງ MCC ລວມທັງຄອມພິວເຕີ, ເຄື່ອງຖ່າຍເອກະສານ, ເຄື່ອງພິມ, ເຄື່ອງແຟັກ, ວາລະສານວິຊາຊີບ, ລາຍຊື່ທຸລະກິດ ແລະສິ່ງພິມຕ່າງໆກ່ຽວກັບການຊອກວຽກເຮັດ ແລະອາຊີບ.
- ✓ ຊອກຫາວິທີສ້າງເຄືອຂ່າຍ ແລະພົບປະກັບຜູ້ຊອກວຽກ ແລະນາຍຈ້າງລາຍອື່ນໆ

## ສິ່ງສຳຄັນອື່ນໆທີ່ຄວນຮູ້: ແຈ້ງໃຫ້ພວກເຮົາຮູ້ເຖິງການປ່ຽນແປງຂໍ້ມູນການຕິດຕໍ່ຂອງທ່ານ ເຊັ່ນ ອີເມວ, ທີ່ຢູ່ທາງໄປສະນີ ຫຼື ເບີໂທລະສັບ. ທ່ານສາມາດ:

1. ອັບເດດຂໍ້ມູນການຕິດຕໍ່ຂອງທ່ານທີ່ບັນຊີ DUA ອອນລາຍຂອງທ່ານ ຫຼື
   - ນັດໝາຍກັບສູນການຈ້າງງານໃໝ່ (Re-Employment Center) ຖ້າທ່ານບໍ່ສາມາດເຂົ້າເຖິງທາງອອນລາຍໄດ້. ໄປທີ່: mass.gov/recappointment.

2. **ອ່ານແລະຕອບທຸກຂໍ້ຄວາມທີ່ພວກເຮົາສົ່ງໃຫ້ທ່ານ** – ເຖິງແມ່ນວ່າສິດປະໂຫຍດທັງໝົດຂອງທ່ານຈະສິ້ນສຸດລົງແລ້ວກໍ່ຕາມ!
   - ຖ້າທ່ານຂໍໃຫ້ພວກເຮົາຕິດຕໍ່ທ່ານທາງເອເລັກໂຕຣນິກ ພວກເຮົາຈະສົ່ງການແຈ້ງເຕືອນທາງອີເມວໃຫ້ທ່ານ ເມື່ອທ່ານມີຈົດໝາຍ ຫຼື ຂໍ້ຄວາມໃໝ່ໃຫ້ກວດເບິ່ງ. ທ່ານຈະຕ້ອງເຂົ້າສູ່ລະບົບບັນຊີຂອງທ່ານເພື່ອອ່ານຈົດໝາຍຫຼືຂໍ້ຄວາມເຫຼົ່ານັ້ນ.
   - ຖ້າທ່ານຂໍໃຫ້ພວກເຮົາຕິດຕໍ່ທ່ານທາງໄປສະນີສະຫະລັດ ພວກເຮົາຈະບໍ່ສົ່ງອີເມວແຈ້ງເຕືອນໃຫ້ທ່ານ. ແຕ່ພວກເຮົາຈະໂພສສຳເນົາທຸກສິ່ງທີ່ພວກເຮົາສົ່ງໃຫ້ທ່ານໃນບັນຊີ DUA ອອນລາຍຂອງທ່ານ.
   - **ກະລຸນາກວດສອບກຳນົດເວລາຂອງພວກເຮົາ**

**ທ່ານອາດຈະສູນເສຍສິດໄດ້ຖ້າທ່ານບໍ່ຕອບກັບໃຫ້ທັນກຳນົດເວລາ!**

- **ໝາຍເຫດ:** ທ່ານສາມາດປ່ຽນວິທີການຕິດຕໍ່ທີ່ທ່ານຕ້ອງການໄດ້ທຸກເວລາ. ພຽງແຕ່ເຂົ້າສູ່ລະບົບບັນຊີ DUA ອອນລາຍຂອງທ່ານ.

3. ແຈ້ງໃຫ້ DUA ຮູ້ຖ້າທ່ານຈະໄປໂຮງຮຽນ, ລົງທະບຽນເຂົ້າຮຽນ ຫຼືຢຸດການຝຶກອົບຮົມເຕັມເວລາທີ່ໄດ້ຮັບການອະນຸມັດຈາກ DUA. ການໄປໂຮງຮຽນອາດຈະສົ່ງຜົນກະທົບຕໍ່ສິດຂອງທ່ານ ເພາະວ່າມັນອາດຈະເຮັດໃຫ້ທ່ານບໍ່ຫວ່າງພ້ອມທີ່ຈະເຮັດວຽກ.

- **ຢ່າ**ຮ້ອງຂໍເງິນຊົດເຊີຍການຫວ່າງງານຖ້າທ່ານຢູ່ນອກສະຫະລັດ ອາເມຣິກາ ຫຼືການາດາ. ທ່ານຈະບໍ່ມີສິດໄດ້ຮັບເງິນຊົດເຊີຍເປັນເວລາຫຼາຍອາທິດຖ້າທ່ານຢູ່ນອກສະຫະລັດ ອາເມຣິກາ, ເຂດປົກຄອງຂອງສະຫະລັດ ອາເມຣິກາ ຫຼືການາດາ. ນີ້ແມ່ນຄວາມຈິງ ເຖິງແມ່ນວ່າທ່ານຈະເຮັດກິດຈະກຳຊອກຫາວຽກຈາກຕ່າງປະເທດກໍ່ຕາມ.



4. **ຖ້າທ່ານເຮັດວຽກໃນຂະນະທີ່ທ່ານໄດ້ຮັບ ຫຼືຂໍຮັບເງິນຊົດເຊີຍ** ທ່ານ**ຕ້ອງ**ລາຍງານລາຍໄດ້ຂອງທ່ານໃນອາທິດທີ່ທ່ານໄດ້ຮັບ. ຢ່າລໍຖ້າຈົນກວ່າຈະໄດ້ຮັບເງິນຊົດເຊີຍກ່ອນທີ່ຈະລາຍງານເຂົາເຈົ້າ. ລູກຈ້າງຕ້ອງລາຍງານຄ່າຈ້າງລວມ (ກ່ອນຫັກພາສີ) ຂອງຕົນເອງໃນແຕ່ລະອາທິດ. ແລະຜູ້ຮ້ອງຂໍເງິນຊົດເຊີຍທີ່ປະກອບອາຊີບອິດສະຫຼະຕ້ອງລາຍງານລາຍໄດ້ສຸດທິປະຈຳອາທິດຫຼັງຈາກການຫັກລົດຫຍ່ອນອອກແລ້ວ.

ທ່ານຈະ**ບໍ່**ມີສິດໄດ້ຮັບເງິນສຳລັບອາທິດໃດໆທີ່ທ່ານເຮັດວຽກຫຼາຍກວ່າ 35 ຊົ່ວໂມງ ຫຼືມີລາຍໄດ້ເກີນຈຳນວນທີ່ກຳນົດ.

**ຄຳເຕືອນ!** ບອກຄວາມຈິງກ່ຽວກັບເງິນໃດໆທີ່ທ່ານໄດ້ຮັບໃນຂະນະທີ່ໄດ້ຮັບ ຫຼືຂໍເງິນຊົດເຊີຍການຫວ່າງງານ. ພວກເຮົາມີວິທີຊອກຫາລາຍໄດ້ເຫຼົ່ານັ້ນ. ຖ້າທ່ານບໍ່ບອກຄວາມຈິງ ທ່ານອາດຈະຕ້ອງຈ່າຍເງິນຊົດເຊີຍຄືນ ໂດຍມີດອກເບ້ຍແລະຄ່າປັບໃໝ.

ຮຽນຮູ້ເພີ່ມເຕີມໄດ້ທີ່: [mass.gov/service-details/working-while-receiving-unemployment-benefits](mass.gov/service-details/working-while-receiving-unemployment-benefits).

## ສິ່ງທີ່ຕ້ອງເຮັດຖ້າ DUA ລະບຸວ່າທ່ານບໍ່ມີສິດໄດ້ຮັບເງິນຊົດເຊີຍການຫວ່າງງານ ຫຼືອະດີດນາຍຈ້າງບໍ່ເຫັນດີນໍາວ່າທ່ານມີສິດ:

| ຖ້າ DUA ແຈ້ງວ່າທ່ານບໍ່ມີສິດ: | ຖ້ານາຍຈ້າງບໍ່ເຫັນດີກັບ DUA ໂດຍບອກວ່າທ່ານມີສິດ: |
|---|---|
| ຖ້າທ່ານບໍ່ເຫັນດີກັບຄໍາຕັດສິນທີ່ DUA ສົ່ງໃຫ້ທ່ານ ເຊິ່ງເຮັດໃຫ້ທ່ານບໍ່ມີສິດໄດ້ຮັບເງິນຊົດເຊີຍ:<br>✓ ທ່ານມີສິດອຸທອນການຕັດສິນໃຈຂອງພວກເຮົາພາຍໃນ **10 ວັນ**. ໜັງສືແຈ້ງການຕັດສິນໃຈຈະອະທິບາຍວິທີການອຸທອນ. | ຖ້ານາຍຈ້າງຂອງທ່ານບໍ່ເຫັນດີກັບຄໍາຕັດສິນທີ່ພວກເຮົາສົ່ງໃຫ້ທ່ານ:<br>✓ ນາຍຈ້າງມີສິດອຸທອນຄໍາຕັດສິນຂອງພວກເຮົາພາຍໃນ **10 ວັນ**. |

✓ **ແຈ້ງການຂອງການໄຕ່ສວນ: ຖ້າທ່ານຫຼືນາຍຈ້າງຂອງທ່ານອຸທອນ, ພວກເຮົາຈະກໍານົດເວລາການໄຕ່ສວນແລະສົ່ງໜັງສືແຈ້ງການການໄຕ່ສວນໃຫ້ທ່ານແລະນາຍຈ້າງຂອງທ່ານ. ແຈ້ງ ການ ພິ ຈາ ລະ ນາ ຈະ ບອກ ທ່ານ ດັ່ງ ຕໍ່ ໄປ ນີ້:**

- ເວລາ ແລະສະຖານທີ່ໄຕ່ສວນ
- ສິ່ງທີ່ຄວນຄາດຫວັງໃນການໄຕ່ສວນ ແລະວິທີການກະກຽມ

ໃນຂະນະທີ່ທ່ານລໍຖ້າການໄຕ່ສວນຄະດີ
ສິ່ງສໍາຄັນແມ່ນທ່ານຕ້ອງສືບຕໍ່ຢັ້ງຢືນເພື່ອຮັບເງິນຊົດເຊີຍຕໍ່ໄປຖ້າທ່ານຍັງຫວ່າງງານ ເຖິງແມ່ນວ່າທ່ານຈະໄດ້ຮັບແຈ້ງວ່າທ່ານບໍ່ມີສິດທີ່ຈະໄດ້ຮັບເງິນຊົດເຊີຍກໍ່ຕາມ. ຖ້າທ່ານໄດ້ຮັບເງິນຊົດເຊີຍຫຼັງການໄຕ່ສວນຄະດີ ທ່ານຈະໄດ້ຮັບເງິນສໍາລັບອາທິດທີ່ທ່ານໄດ້ຮັບການຢັ້ງຢືນ.

## ບຸຄົນໃດແດ່ທີ່ຈະເຂົ້າຮ່ວມການໄຕ່ສວນ?



ໃນກໍລະນີສ່ວນຫຼາຍຈະມີ:

- ຜູ້ຕັດສິນ (ເຊັ່ນ ຜູ້ພິພາກສາ),
- ນາຍຈ້າງຂອງທ່ານ ແລະ
- ທ່ານ (ຜູ້ຮຽກຮ້ອງເງິນຊົດເຊີຍ) ແລະ
- ຜູ້ຕ່າງໜ້າແລະພະຍານທີ່ທ່ານ ຫຼືນາຍຈ້າງຂອງທ່ານຕ້ອງການໃຫ້ເຂົ້າຮ່ວມ. ນີ້ບໍ່ແມ່ນຂໍ້ກໍານົດ ແຕ່ເປັນສິ່ງທີ່ທ່ານຫຼືນາຍຈ້າງຂອງທ່ານສາມາດຮ້ອງຂໍໄດ້.

ຜູ້ຕັດສິນຈະຖາມຄໍາຖາມໃນລະຫວ່າງການໄຕ່ສວນ.

ທ່ານແລະນາຍຈ້າງມີສິດທີ່ຈະໄຕ່ຖາມເຊິ່ງກັນແລະກັນ ແລະໄຕ່ຖາມພະຍານກ່ຽວກັບຄະດີຂອງທ່ານ.

ຖ້າເຫດຜົນໃນການໄຕ່ສວນບໍ່ກ່ຽວຂ້ອງກັບນາຍຈ້າງ ຈະມີພຽງແຕ່ທ່ານແລະຜູ້ຕັດສິນ (ແລະຜູ້ຕ່າງໜ້າ ຫຼືພະຍານຂອງທ່ານ) ເທົ່ານັ້ນທີ່ຈະເຂົ້າຮ່ວມການໄຕ່ສວນ.

## ໄປເຂົ້າຮ່ວມການໄຕ່ສວນ – ຢ່າໄປຊ້າກວ່າເວລານັດໝາຍ!

ທ່ານ, ຜູ້ຕ່າງໜ້າທາງກົດໝາຍຂອງທ່ານ ແລະພະຍານທຸກຄົນຈະຕ້ອງເຂົ້າຮ່ວມການໄຕ່ສວນ**ທັນເວລາ**. ຖ້າ ທ່ານ ຮ້ອງ ຂໍ ໃຫ້ ມີ ການ ໄຕ່ສວນ ແລະ ທ່ານມາຊ້າເກີນກ ວ່າ 10 ນາທີ ພວກເຮົາຈະ**ຍົກເລີກ**ການໄຕ່ສວນ ແລະ**ຍົກຟ້ອງ**ຄະດີຂອງທ່ານ.

ຖ້າທ່ານຮ້ອງຂໍພິຈາລະນາອຸທອນ ແລະນາຍຈ້າງມາຊ້າຫຼືຂາດນັດ ການໄຕ່ສວນຈະດໍາເນີນຕໍ່ໄປໂດຍບໍ່ມີນາຍຈ້າງ. ຄໍາຕັດສິນໃນການພິຈາລະນາອຸທອນຈະອີງໃສ່ສະເພາະຄໍາໃຫ້ການ ແລະຫຼັກຖານທີ່ນໍາສະເໜີໃນການໄຕ່ສວນເທົ່ານັ້ນ.

ຖ້າຜູ້ພິພາກສາຕັດສິນວິນິດໄສວ່າທ່ານບໍ່ມີສິດໄດ້ຮັບເງິນຊົດເຊີຍການຫວ່າງງານ **ການຈ່າຍເງິນຊົດເຊີຍຂອງທ່ານຈະຢຸດເຊົາໃນທັນທີ** ແລະທ່ານອາດຈະຕ້ອງຈ່າຍເງິນຄືນໃຫ້ DUA ສໍາລັບເງິນຊົດເຊີຍທີ່ທ່ານໄດ້ຮັບໄປແລ້ວ. ທ່ານສາມາດຍື່ນອຸທອນ (ເບິ່ງ "*ຈະເກີດຫຍັງຂຶ້ນຖ້າຂ້າພະເຈົ້າບໍ່ເຫັນດີກັບຄໍາ*ວິນິດໄສໃນການໄຕ່ສວນ?") ຫຼືຂໍການຍົກເວັ້ນຈາກພວກເຮົາຖ້າທ່ານບໍ່ສາມາດຈ່າຍເງິນຄືນໄດ້ (ເບິ່ງ "ວິທີຂໍການຍົກເວັ້ນເງິນທີ່ຈ່າຍໃຫ້ເກີນ").

ຖ້າຕ້ອງການຮຽນຮູ້ເພີ່ມເຕີມກ່ຽວກັບການໄຕ່ສວນ ກະລຸນາອ່ານ: "*ກຽມຕົວໃຫ້ພ້ອມສໍາລັບການພິຈາລະນາອຸທອນ.*" ເຊິ່ງຈະສົ່ງໃຫ້ທ່ານເມື່ອທ່ານຍື່ນອຸທອນແລ້ວ.

ທ່ານສາມາດອ່ານ *ກຽມຕົວໃຫ້ພ້ອມສໍາລັບການພິຈາລະນາອຸທອນ* ໄດ້ເຊັ່ນກັນທີ່ mass.gov/info-details/finding-legal-help.

## ຈະເປັນແນວໃດຖ້າຂ້າພະເຈົ້າບໍ່ເຫັນດີກັບຄໍາຕັດສິນໃນການໄຕ່ສວນ?

ຖ້າທ່ານຫຼືນາຍຈ້າງຂອງທ່ານບໍ່ເຫັນດີກັບຄໍາຕັດສິນໃນການໄຕ່ສວນ ຝ່າຍທີ່ບໍ່ເຫັນດີນໍາສາມາດອຸທອນຕໍ່ຄະນະກໍາມະການພິຈາລະນາອຸທອນໄດ້.

ທ່ານສາມາດຍື່ນອຸທອນຕໍ່ຄະນະກໍາມະການພິຈາລະນາອຸທອນໂດຍໃຊ້ແບບຟອມທີ່ທ່ານໄດ້ຮັບພ້ອມກັບຄໍາຕັດສິນໃນການໄຕ່ສວນ. ທ່ານມີເວລາ **30 ວັນ**ໃນການກອກແບບຟອມນີ້ ແລະຍື່ນຕໍ່ຄະນະກໍາມະການພິຈາລະນາອຸທອນ.

ທ່ານສາມາດກອກແບບຟອມນີ້ຜ່ານບັນຊີອອນລາຍຂອງທ່ານ ຫຼືທາງໄປສະນີ. ຖ້າ ທ່ານ ສົ່ງ ຄໍາ ຮ້ອງ ທາງໄປສະນີ ຄໍາຮ້ອງຂໍ ຈະ ຕ້ອງ ໄດ້ ຮັບ ການປະທັບກາໄປສະນີພາຍ ໃນ **ວັນ ທີ 30** ຕາມ ປະ ຕິ ທິນ ຫຼັງ ຈາກ ຄໍາ ຕັດ ສິນ ທີ່ ທ່ານ ຍື່ນ ອຸ ທອນ.

ຄະນະກໍາມະການພິຈາລະນາອຸທອນບໍ່ *ຈໍາເປັນ*ຕ້ອງພິຈາລະນາຄະດີຂອງທ່ານ.

- **ຖ້າຄະນະກໍາມະການພິຈາລະນາອຸທອນ ຮັບ ພິຈາລະນາຄະດີຂອງທ່ານ**
  ເຂົາເຈົ້າຈະໃຊ້ເອກະສານໃນສໍານວນຄະດີຂອງທ່ານ, ຟັງບັນທຶກການໄຕ່ສວນການອຸທອນ ແລະອອກຄໍາຕັດສິນ. ຖ້າ ທ່ານ ບໍ່ ເຫັນ ດີ ກັບ ການ ຕັດ ສິນ ໃຈ ຂອງ ຄະ ນະ ກໍາ ມະ ການພິຈາລະນາອຸທອນ ທ່ານ ສາ ມາດ ຮ້ອງ ຮຽນ ຕໍ່ ສານ ແຂວງປະຈໍາເມືອງ Massachusetts ຫຼືສານເທດສະບານເມືອງ Boston. ຄະນະກໍາມະການຈະສົ່ງຄໍາແນະນໍາໃນການອຸທອນໃຫ້ທ່ານ.
- ຖ້າຄະນະກໍາມະການພິຈາລະນາອຸທອນ ບໍ່ຮັບ ພິຈາລະນາຄະດີຂອງທ່ານ ຫຼື ທ່ານບໍ່ໄດ້ຮັບການຕິດຕໍ່ຈາກຄະນະກໍາມະການພາຍໃນ **21** ວັນ
  ການຕັດສິນໃຈຈາກການອຸທອນການໄຕ່ສວນຍັງຄົງມີຜົນບັງຄັບໃຊ້ ແລະຖືເປັນການຄໍາຕັດສິນທີ່ເປັນທີ່ສິ້ນສຸດຂອງໜ່ວຍງານ. ແຕ່ທ່ານສາມາດຮ້ອງຂໍໃຫ້ສານຕັດສິນຄະດີໄດ້. ຂໍ້ມູນກ່ຽວກັບວິທີການອຸທອນຕໍ່ສານແຂວງປະຈໍາເມືອງ **Massachusetts** ຫຼືສານເທດສະບານເມືອງ **Boston** ຈະລວມຢູ່ໃນຄໍາຕັດສິນຂອງຄະນະກໍາມະການພິຈາລະນາອຸທອນ ຫຼືຖ້າຄະນະກໍາມະການພິຈາລະນາອຸທອນບໍ່ໄດ້ແຈ້ງໃຫ້ທ່ານຮູ້ເຖິງການດໍາເນີນການໃດໆພາຍໃນ **21** ວັນ ທ່ານສາມາດຊອກຫາຂໍ້ມູນເພີ່ມເຕີມກ່ຽວກັບການອຸທອນຕໍ່ສານໄດ້ ໂດຍໄປທີ່: mass.gov/orgs/massachusetts-court-system**.**

**ທະນາຍຄວາມ ຫຼື ເຈົ້າໜ້າທີ່ສະໜັບສະໜູນສາມາດຊ່ວຍເຫຼືອທ່ານໃນການອຸທອນ:** ຖ້າທ່ານຕ້ອງການໃຫ້ບຸຄຄົນອື່ນຕ່າງໜ້າແທນທ່ານໃນການໄຕ່ສວນ ທ່ານມີສິດທີ່ຈະມີທະນາຍຄວາມ ຫຼືເຈົ້າໜ້າທີ່ຊ່ວຍເຫຼືອຕ່າງໜ້າແທນທ່ານ. ແຕ່ທ່ານຕ້ອງຫາບຸຄຄົນຕ່າງໜ້າ**ທັນທີ.** ພວກເຮົາໄມ່ສາມາດເລື່ອນການໄຕ່ສວນຂອງທ່ານອອກໄປໄດ້ດ້ວຍສາເຫດທີ່ທ່ານບໍ່ສາມາດຫາຜູ້ຕ່າງໜ້າໄດ້. ຖ້າທ່ານມີທະນາຍຄວາມ ຫຼື ເຈົ້າໜ້າທີ່ຊ່ວຍເຫຼືອ ທ່ານຄວນຈະແຈ້ງໃຫ້ DUA ຮູ້ກ່ອນວັນພິຈາລະນາອຸທອນ. ທ່ານສາມາດແຈ້ງໄດ້ທາງອອນລາຍ ຫຼື ໂທໄປພະແນກການໄຕ່ສວນທີ່ເບີ: **(617) 626-5200.**

ຖ້າທະນາຍຄວາມ ຫຼື ເຈົ້າໜ້າທີ່ຊ່ວຍເຫຼືອຄິດຄ່າທໍານຽມທະນາຍຄວາມ ທ່ານຕ້ອງໃຫ້ DUA ອະນຸມັດຄ່າທໍານຽມນັ້ນກ່ອນທີ່ທ່ານຈະຊໍາລະເງິນ. ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບຄ່າທໍານຽມ ໄປທີ່:

mass.gov/how-to/attorneys-must-request-fee-approval-from-the-department-of-unemployment-assistance-dua. ທາງ DUA ຈະບໍ່ຮັບຜິດຊອບຄ່າທຳນຽມທະນາຍຄວາມ ຫຼື ຄ່າທຳນຽມເຈົ້າໜ້າທີ່ຊ່ວຍເຫຼືອຂອງທ່ານ.

ສຳລັບຄວາມຊ່ວຍເຫຼືອໃນການຊອກຫາທະນາຍຄວາມ ໄປທີ່ masslrf.org/en/home. ທ່ານສາມາດຕິດຕໍ່ສະມາຄົມທະນາຍຄວາມໃນພື້ນທີ່ຂອງທ່ານ ຫຼື ຫ້ອງການຊ່ວຍເຫຼືອທາງກົດໝາຍໃນພື້ນທີ່ຂອງທ່ານ. ຫ້ອງການ DUA ບໍ່ສາມາດຊ່ວຍເຫຼືອທ່ານຊອກຫາທະນາຍຄວາມໄດ້.

## ຈະເກີດຫຍັງຂຶ້ນຖ້າພວກເຮົາຈ່າຍເງິນໃຫ້ທ່ານເກີນ?

ບາງຄັ້ງ DUA ຈ່າຍເງິນໃຫ້ຜູ້ປະກັນຕົນຫຼາຍເກີນໄປ. ການຈ່າຍເງິນໃຫ້ເກີນເກີດຂຶ້ນໄດ້ເມື່ອພວກເຮົາຈ່າຍເງິນຊົດເຊີຍການຫວ່າງງານໃຫ້ ແລະພາຍຫຼັງມີການພິຈາລະນາວ່າທ່ານບໍ່ມີສິດທີ່ຈະໄດ້ຮັບເງິນຊົດເຊີຍເຫຼົ່ານັ້ນ. ການດຳເນີນການນີ້ເອີ້ນວ່າ "ການພິຈາລະນາສິດໃໝ່." ທ່ານຈະໄດ້ຮັບໜັງສືແຈ້ງການຖ້າພວກເຮົາໄດ້ຮັບຂໍ້ມູນທີ່ອາດຈະເຮັດໃຫ້ພວກເຮົາເຊື່ອໄດ້ວ່າຈຳເປັນຕ້ອງພິຈາລະນາສິດຂອງທ່ານໃໝ່ໃນການຮຽກຮ້ອງເງິນຊົດເຊີຍ. ທ່ານຈະມີໂອກາດເວົ້າລົມກັບເຈົ້າໜ້າທີ່ DUA ກ່ຽວກັບຂໍ້ມູນໃໝ່ໆກ່ອນພວກເຮົາຈະດຳເນີນການພິຈາລະນາສິດໃໝ່.

ຖ້າພວກເຮົາພິຈາລະນາວ່າການຈ່າຍເງິນໃຫ້ທ່ານແມ່ນບໍ່ຖືກຕ້ອງ ພວກເຮົາຈະສົ່ງ *ໜັງສືແຈ້ງການການພິຈາລະນາສິດໃໝ່* ເຊິ່ງອະທິບາຍ:




- ເຫດຜົນໃນການຈ່າຍເງິນເກີນ
- ຈຳນວນອາທິດທີ່ທ່ານໄດ້ຮັບເງິນທີ່ຈ່າຍໃຫ້ເກີນ
- ຈຳນວນເງິນທີ່ຈ່າຍໃຫ້ເກີນ
- ຄ່າປັບໄໝທີ່ອາດຈະມີ
- ວິທີອຸທອນການພິຈາລະນາສິດໃໝ່
- ວິທີຮ້ອງຂໍການຍົກເວັ້ນ

ເຖິງແມ່ນວ່າການຈ່າຍເງິນເກີນຈະບໍ່ແມ່ນຄວາມຜິດຂອງທ່ານ ພວກເຮົາຈະຂໍໃຫ້ທ່ານຈ່າຍຄືນ. ທ່ານມີສິດທີ່ຈະຍື່ນອຸທອນການພິຈາລະນາສິດໃໝ່ (ເບິ່ງ *"ສິ່ງທີ່ຕ້ອງເຮັດຖ້າ DUA ລະບຸວ່າທ່ານບໍ່ມີສິດທີ່ຈະໄດ້ຮັບເງິນຊົດເຊີຍການຫວ່າງງານ"* ຂ້າງເທິງ).

ສິ່ງສຳຄັນແມ່ນໃຫ້ອ່ານໜັງສືແຈ້ງການ

ໃນກໍລະນີທີ່ພວກເຮົາມີຂໍ້ມູນໃໝ່ເຊິ່ງອາດຈະເຮັດໃຫ້ມີການພິຈາລະນາສິດໃໝ່ ເຖິງແມ່ນວ່າທ່ານຈະໄດ້ຮັບເງິນຊົດເຊີຍການຫວ່າງງານ.

ທ່ານສາມາດຈ່າຍເງິນເປັນງວດກັບ DUA. ຊອກຫາເພີ່ມເຕີມໃນບັນຊີ DUA ອອນລາຍຂອງທ່ານ ຫຼື ໂທໄປທີ່ພະແນກ Benefits Collection Department ທີ່ເບີ **(617) 626-6300.**

**ຂໍ້ຍົກເວັ້ນ** ທ່ານສາມາດຂໍອະນຸຍາດທີ່ຈະ <u>ບໍ່</u> ຈ່າຍເງິນຄືນ. ກອກແບບຟອມແລະສົ່ງຄໍາຂໍ*ຍົກເວັ້ນການຈ່າຍຄືນເງິນທີ່ຈ່າຍໃຫ້ເກີນ (Request for Waiver of Overpayment)* ໃຫ້ພວກເຮົາ. ເບິ່ງຂ້າງລຸ່ມ.

## ວິທີຮ້ອງຂໍການຍົກເວັ້ນການຈ່າຍຄືນເງິນທີ່ຈ່າຍໃຫ້ເກີນ:

ທ່ານສາມາດຮ້ອງຂໍໃຫ້ຍົກເລີກການຈ່າຍເງິນເກີນໃຫ້ທ່ານ ເວັ້ນເສຍແຕ່ວ່າພວກເຮົາຈະພິຈາລະນາວ່າການຈ່າຍເງິນເກີນເປັນຄວາມຜິດຂອງທ່ານ ຫຼື ເນື່ອງຈາກການສໍ້ໂກງ. ທ່ານອາດຈະມີສິດທີ່ຈະໃຫ້ຍົກເລີກການຈ່າຍເງິນເກີນ ຫຼື ໃຫ້ມີການຍົກເວັ້ນ ຖ້າ:

- ທ່ານບໍ່ສາມາດຈ່າຍຄືນເງິນທີ່ຈ່າຍໃຫ້ເກີນໄດ້,
- ທ່ານເພິ່ງພາເງິນຊົດເຊີຍການຫວ່າງງານເພື່ອເປັນຄ່າໃຊ້ຈ່າຍ ຫຼື ການຕັດສິນໃຈທາງການເງິນທີ່ອາດຈະບໍ່ສາມາດເຮັດໄດ້ຖ້າບໍ່ມີເງິນຊົດເຊີຍການຫວ່າງງານ ຫຼື
- ການໄດ້ຮັບເງິນຊົດເຊີຍການຫວ່າງງານເຮັດໃຫ້ສະຖານະການດ້ານການເງິນຂອງທ່ານຮ້າຍແຮງຂຶ້ນ ເຊັ່ນ: ໂດຍການຖືກປະຕິເສດສິດປະໂຫຍດອື່ນໆທີ່ທ່ານອາດຈະມີສິດໄດ້ຮັບ.

ທ່ານສາມາດເຂົ້າເຖິງຄໍາຂໍ*ຍົກເວັ້ນການຈ່າຍຄືນເງິນທີ່ຈ່າຍໃຫ້ເກີນ* ທາງບັນຊີ DUA ອອນລາຍຂອງທ່ານ ຫຼື ໂທໄປທີ່ພະແນກ Benefits Collection Department ທີ່ເບີ **(617) 626-6300.**

ຖ້າພວກເຮົາອະນຸມັດຄໍາຂໍ*ຍົກເວັ້ນການຈ່າຍຄືນເງິນທີ່ຈ່າຍໃຫ້ເກີນ*ຂອງທ່ານ ພວກເຮົາຈະຍົກເລີກຍອດເງິນຄົງເຫຼືອຂອງເງິນທີ່ຈ່າຍໃຫ້ເກີນ. ເຊິ່ງໝາຍຄວາມວ່າທ່ານຈະບໍ່ຕ້ອງຈ່າຍເງິນຄືນໃຫ້ພວກເຮົາ.

ຮຽນຮູ້ເພີ່ມເຕີມກ່ຽວກັບການຍົກເວັ້ນເງິນທີ່ຈ່າຍໃຫ້ເກີນໄດ້ທີ່: mass.gov/info-details/learn-about-overpayment-waivers.

## ຄ່າປັບໃໝເງິນທີ່ຈ່າຍໃຫ້ເກີນ ແລະດອກເບ້ຍ:

DUA ຈະສົ່ງໜັງສືແຈ້ງການກ່ຽວກັບການພົບວ່າມີຄວາມຜິດພາດ *(Notice of Fault Finding)* ຖ້າພວກເຮົາພິຈາລະນາວ່າການຈ່າຍເງິນເກີນເປັນ "ຄວາມຜິດ" ຂອງທ່ານ ເນື່ອງຈາກທ່ານໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ແລະຮູ້ ຫຼື ຄວນຮູ້ວ່າຂໍ້ມູນບໍ່ຖືກຕ້ອງ.

ການຈ່າຍເງິນເກີນເນື່ອງຈາກຄວາມຜິດພາດ ຫຼື ການສໍ້ໂກງບໍ່ສາມາດໃຊ້ເປັນຂໍ້ຍົກເວັ້ນໄດ້. ທ່ານຈະຕ້ອງຈ່າຍເງິນຄືນໃຫ້ພວກເຮົາ ລວມທັງ:

- ຈຳນວນເງິນທີ່ຈ່າຍໃຫ້ເກີນ,
- ດອກເບ້ຍ 12% ຂອງເງິນທີ່ຈ່າຍໃຫ້ເກີນ ແລະ
- ຄ່າປັບໄໝ 15% (ຄ່າປັບໄໝຄັ້ງດຽວນີ້ບໍ່ສາມາດໃຊ້ໄດ້ກັບທຸກກໍລະນີ.)

### ອາດມີຄ່າປັບໄໝອື່ນໆ:

ຖ້າທ່ານເຮັດວຽກໃນຂະນະທີ່ໄດ້ຮັບເງິນຊົດເຊີຍການຫວ່າງງານ ແຕ່ບໍ່ໄດ້ລາຍງານລາຍໄດ້ຂອງທ່ານ ທ່ານຈະໄດ້ຮັບໜັງສືແຈ້ງການກ່ຽວກັບການວິນິດໄສວ່າມີການສໍ້ໂກງ. ນອກເຫນືອຈາກດອກເບ້ຍ ແລະຄ່າປັບໄໝ ທ່ານຈະເສຍຄ່າປັບໄໝ "ອາທິດທີ່ຕ້ອງເສີຍຄ່າປັບໄໝ" ສຳລັບແຕ່ລະອາທິດທີ່ທ່ານເຮັດວຽກແລະບໍ່ຄວນມີສິດໄດ້ຮັບສິດປະໂຫຍດໃດໆ. ອາທິດທີ່ເປັນການລົງໂທດແມ່ນອາທິດທີ່ທ່ານຕ້ອງລໍຖ້າກ່ອນທີ່ທ່ານຈະມີສິດໄດ້ຮັບເງິນ. ທ່ານຕ້ອງຢັ້ງຢືນສິດ ແລະມີສິດໄດ້ຮັບເງິນຊົດເຊີຍສຳລັບອາທິດເຫຼົ່ານີ້ ຖ້າບໍ່ດັ່ງນັ້ນ ພວກເຮົາບໍ່ສາມາດນັບອາທິດເຫຼົ່ານີ້ເປັນອາທິດທີ່ຕ້ອງເສີຍຄ່າປັບໄໝຂອງທ່ານໄດ້.

**ທ່ານມີສິດຍື່ນຄຳອຸທອນຕໍ່ຄຳຕັດສິນວ່າເປັນຄວາມຜິດ ຫຼື ການສໍ້ໂກງ. ໜັງສືແຈ້ງການຈະອະທິບາຍວິທີຍື່ນອຸທອນ.**

### ຖ້າທ່ານບໍ່ຈ່າຍເງິນທີ່ຈ່າຍໃຫ້ເກີນ ຫຼື ຮ້ອງຂໍການຍົກເວັ້ນ:

ຖ້າທ່ານບໍ່ຈ່າຍເງິນທີ່ຈ່າຍໃຫ້ເກີນທັງໝົດຄືນ ຫຼື ຮ້ອງຂໍການຍົກເວັ້ນ ທາງ DUA ສາມາດ:

- ຫັກເງິນທີ່ໄດ້ຈາກເງິນຄືນພາສີອິນຄຳແທັກຂອງທ່ານ (ທັງລະດັບລັດ ແລະລະດັບລັດຖະບານກາງ) ແລະ
- ປັບຫຼຸດເງິນຊົດເຊີຍການຫວ່າງງານໃນປັດຈຸບັນ ຫຼື ໃນອະນາຄົດຈາກລັດໃດກໍ່ຕາມ ເພື່ອຈ່າຍຄືນເງິນທີ່ຈ່າຍໃຫ້ເກີນ.
- ຍື່ນຟ້ອງຄະດີທ່ານໃນສານແຂວງ

## ຈະເຮັດແນວໃດຖ້າທ່ານຈຳເປັນຕ້ອງໄດ້ຮັບການຝຶກອົບຮົມເພື່ອຊອກຫາວຽກເຮັດ:

### ໂປແກມໂອກາດໃນການຝຶກອົບຮົມ (TOP)

ຖ້າທ່ານຕ້ອງການທັກສະໃໝ່ເພື່ອກັບຄືນໄປເຮັດວຽກ ທ່ານອາດຈະມີສິດໃນການເຂົ້າຮ່ວມໂປແກມ ໂອກາດໃນການຝຶກອົບຮົມ (TOP). ຖ້າທ່ານມີສິດໃນໂປແກມ TOP ທ່ານສາມາດ:

- ເຂົ້າຮັບການຝຶກອົບຮົມຈາກໂປແກມທີ່ໄດ້ຮັບອະນຸຍາດ,

- ໄດ້ຮັບເງິນຊົດເຊີຍການຫວ່າງງານໃນລະຫວ່າງຝຶກອົບຮົມ ໂດຍບໍ່ຕ້ອງເຮັດກິດຈະກຳຊອກວຽກ ແລະ
- ໄດ້ຮັບ "ການຂະຫຍາຍເວລາ" ໃນການໄດ້ຮັບເງິນຊົດເຊີຍສູງເຖິງ 26 ອາທິດຖ້າທ່ານໄດ້ໃຊ້ເງິນຊົດເຊີຍການຫວ່າງງານປົກກະຕິໝົດລົງກ່ອນຈະການຝຶກອົບຮົມຈະສຳເລັດ.

ຖ້າຕ້ອງການເຂົ້າຮ່ວມໃນໂປແກມ TOP ທ່ານຈະຕ້ອງ:

- ຊອກຫາໂປແກມຝຶກອົບຮົມ*ທີ່ໄດ້ຮັບອະນຸຍາດ* ເຊິ່ງຈະຊ່ວຍໃຫ້ທ່ານກຽມຄວາມພ້ອມໃນຕະຫຼາດງານ. ທ່ານສາມາດຄົ້ນຫາໂປແກມຕ່າງໆໄດ້ທີ່ MassHire Career Center ຫຼື ທີ່: mass.gov/jobquest.
- ຍື່ນໃບສະໝັກ TOP ຂອງທ່ານ **ພາຍໃນ 20 ອາທິດທຳອິດ ເຊິ່ງທ່ານໄດ້ຮັບເງິນຊົດເຊີຍການຫວ່າງງານ**. ບັນຊີອອນລາຍຂອງທ່ານຈະແຈ້ງໃຫ້ຮູ້ວ່າທ່ານມີເວລາເຫຼືອຈັກອາທິດໃນການສະໝັກເຂົ້າຮ່ວມໂປແກມ TOP.

**ໝາຍເຫດ:** ໂຮງຮຽນຂອງທ່ານ ຫຼື ໂປແກມຝຶກອົບຮົມຕ້ອງກອກໃບສະໝັກຂອງທ່ານບາງສ່ວນກ່ອນທີ່ທ່ານຈະຍື່ນໃຫ້ກັບ DUA.

ຖ້າທ່ານມີຂໍ້ສົງໄສກ່ຽວກັບໂປແກມ TOP ຫຼື ວິທີສະໝັກ ລວມທັງການສະໝັກ:

- ໄປທີ່ mass.gov/dua/training
- ໂທໄປທີ່ສູນ Contact Center ຂອງພວກເຮົາ ຫຼື
- ໄປທີ່ສູນອາຊີບ MassHire. ໝາຍເຫດ: DUA ບໍ່ຈ່າຍຄ່າຝຶກອົບຮົມຂອງທ່ານ. ຖ້າທ່ານຢຸດການຝຶກອົບຮົມທີ່ໄດ້ຮັບການອະນຸມັດກ່ອນວັນທີທີ່ທ່ານໄດ້ຮັບອະນຸມັດ, ທ່ານຕ້ອງແຈ້ງພວກເຮົາທັນທີເພາະວ່າທ່ານຈະບໍ່ໄດ້ຮັບສິດປະໂຫຍດ TOP ຖ້າທ່ານບໍ່ໄດ້ເຂົ້າໂຮງຮຽນ ຫຼື ເຂົ້າຮ່ວມໂປແກມຝຶກອົບຮົມທີ່ໄດ້ຮັບອະນຸມັດ. ຈະຖືວ່າທ່ານໄດ້ຮັບເງິນທີ່ຈ່າຍໃຫ້ເກີນຖ້າພວກເຮົາພົບວ່າທ່ານບໍ່ໄດ້ເຂົ້າຮ່ວມໂປແກມທີ່ທ່ານໄດ້ຮັບອະນຸມັດແຕ່ຍັງໄດ້ຮັບເງິນຊົດເຊີຍ.

## ມີຄຳຖາມບໍ່?

ຕິດຕໍ່ສູນ Benefits Contact Center ທີ່ Department of Unemployment Assistance. ໂທຫາພວກເຮົາທີ່ເບີ **(617) 626-6800.**



## ຂໍ້ມູນການຕິດຕໍ່ທີ່ອາດຈໍາເປັນສໍາລັບທ່ານ:

| | |
|---|---|
| **DUA ອອນລາຍ:** *(ວິທີທີ່ໄວທີ່ສຸດ)* | ໄປທີ່: [mass.gov/unemployment-insurance-ui-for-workers](mass.gov/unemployment-insurance-ui-for-workers) ເພື່ອສະໝັກຂໍຮັບເງິນຊົດເຊີຍ, ກວດສອບສະຖານະຄໍາຮ້ອງຂໍຂອງທ່ານ, ຍື່ນຂໍເງິນຊົດເຊີຍປະຈໍາອາທິດ ແລະສົ່ງຂໍ້ມູນໄປໃຫ້ DUA. ເວັບໄຊນີ້ໃຊ້ງານໄດ້ດີທີ່ສຸດກັບແລັບທັອບ ຫຼື ຄອມພິວເຕີຕັ້ງໂຕະ ຫຼື ສະມາດໂຟນ ແລະອຸປະກອນເຄື່ອນທີ່ອື່ນໆ. |
| **DUA ທາງໂທລະສັບ:** | **ສໍາລັບເງິນຊົດເຊີຍ** ຫຼື ຂໍຄວາມຊ່ວຍເຫຼືອໃນການສະໝັກ ໂທເບີ: **(877) 626-6800** (ສໍາລັບລະຫັດທາງໄກ **351, 413, 508, 774,** ແລະ **978**), **(617) 626-6800** (ສໍາລັບລະຫັດທາງໄກອື່ນ), M-F: 8:30 ໂມງເຊົ້າ - 4:30 ໂມງເຊົ້າບ່າຍ **ສໍາລັບການຖ່າຍທອດສຽງສໍາລັບຄົນຫູໜວກ/ຜູ້ບົກຜ່ອງດ້ານການໄດ້ຍິນ ໂທເບີ: 711.ຖ້າຕ້ອງການກວດສອບຄໍາຮ້ອງ ຫຼື ສະຖານະການຈ່າຍເງິນຊົດເຊີຍ** ໂທເບີ: **(617) 626-6563.** ສາຍຊ່ວຍເຫຼືອການຍື່ນຄໍາຮ້ອງປະຈໍາອາທິດ: **TeleCert Line: (617) 626-6338,** ທຸກວັນ ເວລາ 6 ໂມງເຊົ້າ - 10 ໂມງບ່າຍ |
| **ຄວາມຊ່ວຍເຫຼືອແບບພົບໜ້າ:** ສູນຈ້າງງານໃໝ່ Boston Re-Employment Center (REC) | ທ່ານຈໍາເປັນຕ້ອງນັດໝາຍ *ກ່ອນ* ທີ່ທ່ານຈະເດີນທາງໄປ ທີ່ [mass.gov/recappointment](mass.gov/recappointment) ຫຼື ໂທເບີ: **(617) 626-6800**, M-F: 8:30 ໂມງເຊົ້າ - 4:30 ໂມງແລງ 2 Avenue de Lafayette, Boston, MA 02111. |
| **MassHire Career Centers** ສໍາລັບການຊ່ວຍເຫຼືອດ້ານການຊອກວຽກແລະການຝຶກອົບຮົມ | ຊອກຫາຫ້ອງການໃນພື້ນທີ່ຂອງທ່ານ ໄປທີ່: [mass.gov/careercenters](mass.gov/careercenters) ຫຼື ໂທເບີ: **(617) 626-5300,** M-F: 8:30 ໂມງເຊົ້າ - 4:30 ໂມງແລງ |
| **MassHire Career Centers** | ນັດໝາຍຊັ້ນຮຽນ: ໄປທີ່: [mass.gov/jobquest](mass.gov/jobquest), ໂທເບີ: **(800) 653-5586** ສໍາລັບຄວາມຊ່ວຍເຫຼືອດ້ານພາສາ ໂທເບີ: |

| | |
|---|---|
| ສຳລັບຊັ້ນຮຽນ<br>ແລະການສຳມະນາ | **1-(888) 822-3422** |

| | |
|---|---|
| ການໃຊ້ຄອມພິວເຕີຟຣີ | ສໍາລັບການໃຊ້ຄອມພິວເຕີຟຣີ ໄປທີ່ຫ້ອງສະໝຸດໃນພື້ນທີ່ຂອງທ່ານ ຫຼື ທີ່ສູນ MassHire Career Center |
| **ບໍລິການດ້ານພາສາ ແລະການເຂົ້າເຖິງສໍາລັບຄົນພິການ** | ຕິດຕໍ່ພວກເຮົາທາງໂທລະສັບທີ່ເບີ **1-(888) 822-3422** ຫຼື ອີເມວໄປທີ່ multilingualServices@mass.gov |

ທ່ານສາມາດຂໍຮັບສໍາເນົາເອກະສານນີ້ເປັນພາສາອື່ນໄດ້ທີ່: mass.gov/dua-multilingual-services.

## ຖ້າທ່ານເວົ້າພາວາອັງກິດບໍ່ຖະນັດ ກະລຸນາອ່ານປະກາດສະບັບນີ້:

The enclosed notice contains important information about unemployment insurance. The notice may contain important deadlines. It may tell you how to appeal an unemployment decision or tell you what your next steps are. You should have it translated immediately. If you need help translating the notice or have questions, please call the Multilingual Services Unit at **1-(888) 822-3422,** and select your language. If you are claiming unemployment benefits, you must continue to certify weekly for each week that you are unemployed. For general help, claimants can call **(617) 626-6800.** Employers can call **(617) 636-5075**. Translators are available.

El aviso adjunto contiene información importante sobre el seguro de desempleo. Puede incluir fechas límite importantes. Puede indicarle cómo apelar una decisión sobre el seguro de desempleo o cuáles son sus próximos pasos. Debe traducirlo de inmediato. Si necesita ayuda para traducir el aviso o tiene alguna pregunta, llame a la Unidad de Servicios Multilingües al **1-(888) 822-3422** y seleccione **1 para español**. Si solicita beneficios de desempleo, debe seguir certificando semanalmente por cada semana que esté desempleado. Para obtener ayuda general, los reclamantes pueden llamar al **(617) 626-6800.** Los empleadores pueden llamar al **(617) 636-5075.** Hay intérpretes disponibles.

Avi ki anekse a gen enfòmasyon enpòtan sou asirans chomaj. Avi a ka genyen dat limit ki enpòtan. Li ka di w fason pou fè apèl yon desizyon sou chomaj oswa pwochen etap ou dwe swiv. Ou dwe fè yo tradui li touswit. Si ou bezwen èd pou fè tradwi l oubyen gen okenn kesyon, tanpri rele nimewo Telefòn Gratis lan nan **1-(888) 822-3422** epi chwazi opsyon **2 pou Kreyòl Ayisyen**. Si ou ap reklame benefis chomaj yo, ou dwe kontinye deklare pou chak semèn ou fè san travay. Pou moun k ap reklame yo jwenn èd jeneral, yo kapab rele **(617) 626-6800**. Anplwayè yo kapab rele **(617) 636-5075.** Gen tradiktè ki disponib.

随附的通知包含有關失業保險的重要信息. 該通知可能包含重要的截止日期. 它可能會告訴您如何對失業決定上訴或告訴您下一個步驟. 你應該立即翻譯它. 如果您需要協助翻譯該通知或有疑問. 请致電多語言服務部門 **1-(888) 822-3422,** 并选 **3 给廣東話.** 如果您正在領取失業金, 您必須繼續每週證明自己失業. 如果需一般協助,索賠人士可以致電 **(617) 626-6800.** 雇主們可以致電 **(617) 636-5075.** 可以提供口譯服務随附的通知包含有关失业保险的重要信息. 该通知可能包含重要的截止日期. 它可能会告诉您如何对失业决定上诉或告诉您下一个步骤. 你应该立即翻译它. 如果您需要协助翻译该通知或有疑问, 请致电多语言服务部门 **1-(888) 822-3422,** 并选 **4 给普通話**. 如果您正在领取失业金, 您必须继续每周证明自己失业. 如果需一般協助,索赔人士可以致电 **(617) 626-6800.** 雇主们可以致电 **(617) 636-5075.** 可以提供口译服务.

Thông báo kèm theo có chứa thông tin quan trọng về bảo hiểm thất nghiệp. Thông báo có thể chứa các thời hạn quan trọng. Thông báo có thể cho bạn biết cách kháng cáo quyết định thất nghiệp hoặc cho bạn biết các bước tiếp theo cần làm. Bạn nên dịch thông báo ngay lập tức. Nếu bạn cần trợ giúp dịch thông báo hoặc có thắc mắc, xin vui lòng gọi đến đơn vị dịch vụ đa ngôn ngữ theo số **1-(888) 822-3422** và chọn **5 cho tiếng Việt**. Nếu bạn đang yêu cầu tiền thất nghiệp, bạn phải tiếp tục chứng nhận hàng tuần cho mỗi tuần bạn còn thất nghiệp. Để được trợ giúp chung, người yêu cầu có thể gọi đến số **(617) 626-6800.** Người sử dụng lao động có thể gọi đến số **(617) 636-5075.** Phiên dịch viên có nếu cần.

O aviso anexo contém informações importantes sobre o seguro-desemprego. O aviso pode conter prazos importantes. Pode lhe dizer como apelar de uma decisão de desemprego ou dizer quais são seus próximos passos. Você deve traduzi-lo imediatamente. Se você precisar de ajuda com a tradução ou tiver alguma dúvida, por favor ligue para o Serviço de Ligação Gratúita através do número **1-(888) 822-3422** e selecione **6 para Português**. Se você estiver solicitando o seguro-desemprego, deverá continuar a certificar-se semanalmente para cada semana que estiver desempregado. Para obter ajuda geral, os requerentes podem ligar para **(617) 626-6800.** Os empregadores podem ligar para **(617) 636-5075.** Há intérpretes disponíveis.

В прилагаемом уведомлении содержится важная информация о страховании по безработице. В этом уведомлении могут указываться важные сроки. В нём может описываться, как обжаловать решение относительно пособия по безработице или что делать дальше. Вам следует срочно сделать его перевод. Если вам нужна помощь в переводе уведомления или у вас есть вопросы, позвоните в Отдел языкового обслуживания (Multilingual Services Unit) по телефону **1-(888) 822-3422** и нажмите **7, чтобы выбрать русский язык**. Если вы подаёте заявление о получении пособия по безработице, вы должны и далее еженедельно подтверждать, что вы являетесь безработным. За помощью общего характера заявители могут обращаться по телефону **(617) 626-6800.** Работодатели могут звонить по телефону **(617) 636-5075.** Предлагаются услуги перевода.

L’avviso qui allegato contiene informazioni importanti riguardanti l’assicurazione di disoccupazione. Questa comunicazione potrebbe contenere delle scadenze importanti. Potrebbe spiegare come fare ricorso contro una decisione o quali potrebbero essere i passi successivi. Vi preghiamo di farla tradurre immediatamente. Se avete bisogno di aiuto per la traduzione o in caso di dubbi, chiamate il numero gratuito **1-(888) 822-3422** e selezionate **8 per l’Italiano**. Se ricevete il sussidio di disoccupazione, dovrete continuare a mandare i resoconti settimanali per ogni settimana in cui siete disoccupati. Per un aiuto di carattere generale, chiamate il numero **(617) 626-6800.** I datori di lavoro possono chiamare il **(617) 636-5075.** Ci sono traduttori disponibili.

សេចក្ដីជូនដំណឹងដាក់ផ្ជាប់មាននូវព័ត៌មានសំខាន់អំពីការធានារ៉ាប់រងខាងមិនមានការងារធ្វើ។ សេចក្ដីជូនដំណឹងអាចមានដាក់កំណត់ ថ្ងៃ។ វាអាចប្រាប់អ្នកអំពីរបៀបដាក់បណ្ដឹងឧទ្ធរណ៍ការសម្រេចចិត្តខាងការមិនមានការងារធ្វើ ឬប្រាប់អ្នកអំពីជំហានបន្ទាប់របស់អ្នក។ អ្នកគួរតែធ្វើការបកប្រែយ៉ាងឆាប់រហ័ស។ ប្រសិនបើអ្នកត្រូវការការបកប្រែសេចក្ដីជូនដំណឹង ឬមានសំណួរសូមទាក់ទងទៅអង្គភាពសេវាពហុភាសាលេខ **1-(888) 822-3422,** ហើយជ្រើសយកលេខ **9 សម្រាប់ភាសាខ្មែរ។** ប្រសិនបើអ្នកទាមទារអត្ថប្រយោជន៍ មិនការងារធ្វើធ្វើ អ្នកត្រូវតែបន្តបញ្ជាក់ប្រចាំសប្ដាហ៍ស្រាប់រៀងរាល់សប្ដាហ៍ដែលអ្នកមិនមានការងារធ្វើ។ សម្រាប់ជំនួយទូទៅ អ្នកដាក់ទាមទារអាចទូរស័ព្ទទៅលេខ **(617) 626-6800** ។ និយោជកអាចទូរស័ព្ទទៅលេខ **(617) 636-5075** ។ មានអ្នកបកប្រែជូន។

ເອກະສານແຈ້ງການທີ່ຕິດຄັດມານີ້ມີຂໍ້ມູນສຳຄັນກ່ຽວກັບປະກັນການຫວ່າງງານ. ເອກະສານແຈ້ງການອາດລະບຸກຳນົດເວລາທີ່ສຳຄັນ.ເອກະສານນີ້ອາດຈະແຈ້ງໃຫ້ທ່ານຮູ້ວິທີການອຸທອນຄຳຕັດສິນກ່ຽວກັບການຫວ່າງງານ ຫຼືແຈ້ງໃຫ້ທ່ານຮູ້ເຖິງຂັ້ນຕອນຕໍ່ໄປຂອງທ່ານ. ທ່ານຄວນແປເອກະສານແຈ້ງການສະບັບນີ້ທັນທີ. ຖ້າ ທ່ານຕ້ອງການຄວາມຊ່ວຍເຫຼືອໃນການແປເອກະສານແຈ້ງການ ຫຼື ມີຂໍ້ສົງໄສ ກະລຸນາໂທຫາໜ່ວຍບໍລິການຫຼາຍພາສາທີ່ໝາຍເລກ **1-(888) 822-3422** ແລະເລືອກ **10 ສຳລັບພາສາລາວ**. ຖ້າທ່ານກຳລັງຮ້ອງຂໍເງິນຊ່ວຍເຫຼືອການຫວ່າງງານ ທ່ານຕ້ອງສືບຕໍ່ດຳເນີນການຢັ້ງຢືນເປັນປະຈຳທຸກອາທິດສຳລັບແຕ່ລະອາທິດທີ່ທ່ານຫວ່າງງານ. ສຳລັບຄວາມຊ່ວຍເຫຼືອທົ່ວໄປ ຜູ້ຂໍຮັບເງິນຊົດເຊີຍສາມາດໂທໄປທີ່ໝາຍເລກ **(617) 626-6800.** ນາຍຈ້າງສາມາດໂທໄປທີ່ໝາຍເລກ **(617) 636-5075.** ມີນັກແປພາສາພ້ອມໃຫ້ບໍລິການ.

동봉된 안내문에는 실업 보험에 대한 중요한 정보가 포함되어 있습니다. 안내문에는 중요한 마감일이 포함되어 있을 수 있습니다. 안내문을 통해 실업 결정에 대해 이의 제기를 하는 방법이나 다음 단계에 대한 정보를 알려줄 수 있습니다. 이 안내문을 즉시 번역 조치를 하여야 합니다. 안내문 번역에 도움이 필요하거나 질문이 있는 경우, **1-(888) 822-3422** 번으로 다국어 서비스 부서 (Multilingual Services Unit) 에 전화하신 다음, **한국어 서비스를 원하시면 11 번을** 선택하십시오. 실업 급여를 청구하고 있는 경우, 각 주마다 매주 실직 상태임을 계속 증명해야 합니다. 일반적인 도움을 원하시면, 청구인은 **(617) 626-6800** 번으로 문의할 수 있습니다. 고용주는 **(617) 636-5075** 번으로 문의할 수 있습니다. 통역 서비스를 이용할 수 있습니다.

L’avis ci-joint comporte des informations importantes sur l’assurance chômage. Il peut contenir des échéances importantes. Il peut vous indiquer comment faire appel d’une décision en matière de chômage ou quelles sont vos prochaines démarches. Si vous avez besoin d’assistance pour la traduction ou si vous avez des questions, veuillez appeler le numéro gratuit **1-(888) 822-3422** et choisir le **12 pour le français.** Si vous demandez des allocations chômage, vous devez continuer à certifier chaque semaine de chômage. Pour obtenir une aide générale, les demandeurs peuvent appeler le **(617) 626-6800.** Les employeurs peuvent appeler le **(617) 636-5075.** Des interprètes sont disponibles.

## ໝາຍເຫດ:

# ໝາຍເຫດ:

# ໝາຍເຫດ: